ສາທາລະນະລະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກົດໝາຍ
# ວ່າດ້ວຍ ຂໍ້ຜູກພັນໃນສັນຍາ

## ພາກທີ I
## ວ່າດ້ວຍບົດບັນຍັດທົ່ວໄປ

### ໝວດທີ 1
### ຫລັກການລວມ

**ມາດຕາ 1** : ພາລະໜ້າທີ່ຂອງສັນຍາ.

ສັນຍາແມ່ນການຕົກລົງລະຫວ່າງອົງການຈັດຕັ້ງດ້ວຍກັນ ອົງການຈັດຕັ້ງກັບບຸກຄົນ ຫລື ບຸກຄົນດ້ວຍກັນ ຊຶ່ງພາໃຫ້ສິດ ແລະພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫລື ສິ້ນສຸດລົງ.

ສັນຍາມີພາລະໜ້າທີ່ສ້າງສາຍພົວພັນທາງດ້ານຊັບສິ່ງຂອງລະຫວ່າງຂະແໜງການ ແລະພາກສ່ວນເສດຖະກິດຕ່າງໆ, ຍົກສູງຄວາມຮັບຜິດຊອບຂອງອົງການຈັດຕັ້ງ ແລະບຸກຄົນຕໍ່ຂໍ້ຜູກພັນ ເພື່ອປັບປຸງ ແລະເສີມຂະຫຍາຍສາຍພົວພັນທາງດ້ານຊັບສິ່ງຂອງ ໃນຊີວິດການເປັນຢູ່ປະຈຳວັນຂອງປະຊາ ຊົນ ແລະການພົວພັນສິນຄ້າ-ເງິນຕາ ໃນພື້ນຖານເສດຖະກິດແຫ່ງຊາດ.

**ມາດຕາ 2** : ພາກສ່ວນທີ່ເຂົ້າຮ່ວມໃນສັນຍາ.

ສັນຍາອາດຈະເຮັດຂຶ້ນລະຫວ່າງ ອົງການຈັດຕັ້ງຂອງລັດ ຫລື ລວມໝູ່ດ້ວຍກັນ;

ອົງການຈັດຕັ້ງຂອງລັດ ຫລື ລວມໝູ່ກັບນິຕິບຸກຄົນອື່ນ ຫລື ບຸກຄົນ ;

ນິຕິບຸກຄົນ ຫລື ບຸກຄົນດ້ວຍກັນ.

### ໝວດທີ II

## ເງື່ອນໄຂ ແລະເນື້ອໃນຂອງສັນຍາ.

**ມາດຕາ 3 :** ຄູ່ສັນຍາ

ຄູ່ສັນຍາປະກອບດ້ວຍລູກໜີ້ ແລະເຈົ້າໜີ້.

ລູກໜີ້ ແມ່ນຜູ້ທີ່ມີພັນທະເຮັດສິ່ງໃດສິ່ງໜຶ່ງທີ່ແນ່ນອນ ເພື່ອຜົນປະໂຫຍດຂອງເຈົ້າໜີ້ ເຊັ່ນ : ມອບຊັບສິ່ງຂອງ, ປະຕິບັດວຽກງານ, ຈ່າຍເງິນ ແລະອື່ນໆ ຫລື ບໍ່ເຮັດສິ່ງໃດສິ່ງໜຶ່ງທີ່ແນ່ນອນ.

ເຈົ້າໜີ້ ແມ່ນ ຜູ້ທີ່ມີສິດທວງໃຫ້ລູກໜີ້ປະຕິບັດພັນທະດັ່ງກ່າວ

**ມາດຕາ 4 :** ປະເພດສັນຍາ.

ສັນຍາອາດຈະເຮັດຂຶ້ນໂດຍຝ່າຍດຽວ, ສອງຝ່າຍ ຫລືຫລາຍຝ່າຍກໍໄດ້.

ສັນຍາຝ່າຍດຽວ ແມ່ນການຕົກລົງຂອງຝ່າຍໜຶ່ງຝ່າຍດຽວທີ່ພາໃຫ້ເກີດພັນທະແກ່ຕົນ ໂດຍບໍ່ມີການຕອບແທນເຊັ່ນການມອບຊັບ.

ສັນຍາສອງຝ່າຍ ຫລື ຫລາຍຝ່າຍແມ່ນການຕົກລົງຂອງສອງຝ່າຍຫລື ຫລາຍຝ່າຍທີ່ພາໃຫ້ເກີດ ແລະພັນທະລະຫວ່າງຄູ່ສັນຍາດ້ວຍກັນ.

ສັນຍາທາງແພ່ງນີ້ ຈະກາຍເປັນສັນຍາເສດຖະກິດ ຖ້າວ່າເປົ້າໝາຍຂອງມັນຫາກແມ່ນການເຄື່ອນໄຫວທຸລະກິດ.

**ມາດຕາ 5 :** ເງື່ອນໄຂຂອງສັນຍາ.

ສັນຍາທີ່ຖືກຕ້ອງປະກອບດ້ວຍເງື່ອນໄຂດັ່ງນີ້

ຄວາມສະໝັກໃນຂອງຄູ່ສັນຍາ;

ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ;

ວັດຖຸປະສົງຂອງສັນຍາຕ້ອງຊັດເຈນ, ມີຈິງ ແລະຖືກຕ້ອງຕາມກົດໝາຍ;

ເຫດຜົນຂອງສັນຍາຕ້ອງຖືກຕ້ອງຕາມກົດໝາຍ;

ຮູບການຂອງສັນຍາຕ້ອງສອດຄ່ອງກັບການກໍານົດຂອງກົດໝາຍ.

**ມາດຕາ 6 :** ຄວາມສະໝັກໃຈຂອງຄູ່ສັນຍາ.

ໃນເມື່ອຄູ່ສັນຍາຫາກມີຄວາມສົມຍອມເຮັດສັນຍານໍາກັນແລ້ວກໍຈະຖືວ່າເປັນຄວາມສະໝັກໃຈ.

ຈະບໍ່ຖືວ່າເປັນຄວາມສະໝັກໃຈ ໃນກໍລະນີຄູ່ສັນຍາຝ່າຍໃດຝ່າຍໜຶ່ງນັ້ນ ຫາກເຮັດສັນຍາຂຶ້ນດ້ວຍຄວາມຫລົງຜິດ, ຕົວະຍົວະຫລອກຫລວງ, ບັງຄັບນາບຂູ່ ຫລືໃຊ້ຄວາມຮຸນແຮງ ຫລື ເຮັດຂຶ້ນໂດຍຝ່າຍໜຶ່ງໄດ້ຮັບຄວາມອັບປະໂຫຍດ.

ຖ້າວ່າເປົ້າໝາຍຂອງສັນຍາຫາກບໍ່ຖືກຕ້ອງຕາມທີ່ຄູ່ສັນຍາໄດ້ຕົກລົງແລ້ວ ກໍຈະຖືວ່າສັນຍານັ້ນເຮັດຂຶ້ນດ້ວຍຄວາມຫລົງຜິດ.

ໃນເມື່ອຄູ່ສັນຍາຝ່າຍຫນຶ່ງຫາກໄດ້ໃຊ້ກົນອຸບາຍຊຶ່ງພາໃຫ້ອີກຝ່າຍຫນຶ່ງຫລົງເຊື່ອ ແລະມີຄວາມສົມຍອມເຮັດສັນຍານັ້ນ ກໍຈະຖືວ່າສັນຍາເຮັດຂຶ້ນດ້ວຍການຕົວະຍົວະຫລອກຫລັງ.

ຈະຖືວ່າເປັນສັນຍາທີ່ເຮັດຂຶ້ນດ້ວຍການບັງຄັບນາບຂູ່ ຫລື ໃຊ້ຄວາມຮຸນແຮງ ເມື່ອຄູ່ສັນຍາຝ່າຍໃດຝ່າຍຫນຶ່ງຫາກສົມຍອມເຮັດສັນຍາ ຍ້ອນຄວາມຢ້ານກົວຕໍ່ການກະທຳດັ່ງກ່າວ ຊຶ່ງເປັນອັນຕະລາຍແກ່ຕົນເອງ, ຄອບຄົວ, ຊັບສົມບັດ ຫລືຍາດພີ່ນ້ອງຂອງຕົນ.

ຈະຖືວ່າເປັນສັນຍາທີ່ເຮັດຂຶ້ນໂດຍຝ່າຍຫນຶ່ງໄດ້ຮັບຄວາມອັບປະໂຫຍດ ເມື່ອຜົນປະໂຫຍດ ທີ່ເກີດຈາກສັນຍານັ້ນ ຫາກບໍ່ສະເຫມີກັນ ລະຫວ່າງຄູ່ສັນຍາ.

**ມາດຕາ 7** : ຄວາມສາມາດທາງດ້ານການປະພຶດ.

ຄວາມສາມາດທາງດ້ານການປະພຶດ ແມ່ນຄວາມສາມາດດ້ວຍການກະທຳຂອງຕົນເອງ ທີ່ພາໃຫ້ເກີດສິດ ແລະພັນທະທາງແພ່ງແກ່ຕົນ.

ບຸກຄົນໃດບຸກຄົນຫນຶ່ງ ຈະຖືວ່າເປັນຜູ້ມີຄວາມສາມາດທາງດ້ານການປະພຶດໄດ້ ກໍຕໍ່ເມື່ອ

ບຸກຄົນຜູ້ນັ້ນຫາກມີອາຍຸແຕ່ ສິບແປດປີ ຂຶ້ນໄປ ແລະບໍ່ເປັນຄົນເສັຽຈິດ.

ບຸກຄົນທີ່ມີອາຍຸຍັງບໍ່ທັນເຖິງສິບແປດປີ ຫາກໄດ້ແຕ່ງດອງຖືກຕ້ອງຕາມກົດຫມາຍແລ້ວ ກໍຈະຖືວ່າເປັນຜູ້ມີຄວາມສາມາດທາງດ້ານການປະພຶດ.

ອົງການຈັດຕັ້ງໃດຫນຶ່ງຈະຖືວ່າມີຄວາມສາມາດທາງດ້ານການປະພຶດໄດ້ ກໍຕໍ່ເມື່ອອົງການຈັດຕັ້ງນັ້ນ ຫາກຖືກຮັບຮອງເອົາວ່າມີຖານະເປັນນິຕິບຸກຄົນ.

**ມາດຕາ 8** : ວັດຖຸປະສົງຂອງສັນຍາ.

ວັດຖຸປະສົງຂອງສັນຍາແມ່ນເປົ້າຫມາຍທີ່ຄູ່ສັນຍາຕ້ອງການໃຫ້ມີຂຶ້ນ.

ວັດຖຸປະສົງຕ້ອງໃຫ້ຊັດເຈນ, ມີຈິງ, ຖືກຕ້ອງຕາມກົດຫມາຍ ຫລືບໍ່ແຕະຕ້ອງເຖິງຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະສາມາດປະຕິບັດໄດ້.

**ມາດຕາ 9** : ເຫດຜົນຂອງສັນຍາ.

ເຫດຜົນຂອງສັນຍາ ແມ່ນສິ່ງຊຸກຍູ້ໃຫ້ເຮັດສັນຍາ ແລະໃຫ້ຄູ່ສັນຍານັ້ນໄດ້ປະຕິບັດສິດ ແລະພັນທະຂອງຕົນ.

ເຫດຜົນຂອງສັນຍາ ຕ້ອງໃຫ້ມີຈິງ ແລະຖືກຕ້ອງຕາມກົດຫມາຍ.

**ມາດຕາ 10** : ຮູບການຂອງສັນຍາ.

ສັນຍາຕ້ອງເຮັດເປັນລາຍລັກອັກສອນ. ສັນຍາອາດຈະເຮັດທາງປາກເປົ່າກໍໄດ້ ໃນກໍລະນີທີ່ສັນ ຍາຫາກມີມູນຄ່າແຕ່ ຫ້າພັນກີບ ລົງວາເວັ້ນເສັຽແຕ່ສັນຍາຢືມຊັບສິ່ງຂອງໄປໃຊ້.

ສັນຍາທີ່ເຮັດເປັນລາຍລັກອັກສອນນັ້ນຕ້ອງລົງວັນທີ ແລະມີລາຍເຊັນຂອງຄູ່ສັນຍາ. ສັນຍາອາດຈະຂຽນດ້ວຍມື ຫລືພິມດີດກໍໄດ້ ຊຶ່ງສະແດງອອກໃນ ສາມຮູບການດັ່ງນີ້ :

ສັນຍາທີ່ເຮັດຊ້ອງໜ້າພະນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານພ້ອມດ້ວຍພະຍານ ສາມຄົນ;

ສັນຍາທີ່ເຮັດຂຶ້ນໂດຍຄູ່ສັນຍາເອງ ແລະຢັ້ງຢືນໂດຍພະນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ;

ສັນຍາທີ່ເຮັດຂຶ້ນໂດຍຄູ່ສັນຍາດ້ວຍກັນເທົ່ານັ້ນ;

ສັນຍາລະຫວ່າງອົງການຈັດຕັ້ງຂອງລັດ ຫລື ລວມໝູ່ດ້ວຍກັນ, ສັນຍາລະຫວ່າງອົງການຈັດຕັ້ງກັບບຸກຄົນຕ້ອງເຮັດເປັນລາຍລັກອັກສອນ.

**ມາດຕາ 11** : ເນື້ອໃນຂອງສັນຍາ.

ເນື້ອໃນຂອງສັນຍາ ແມ່ນຄຳຕົກລົງທີ່ຈຳເປັນ ຊຶ່ງພາໃຫ້ຄູ່ສັນຍາໄດ້ປະຕິບັດສິດ ແລະພັນທະຕໍ່ກັນ.

ຄຳຕົກລົງນັ້ນອາດຈະປະກອບດ້ວຍ :

ເປົ້າໝາຍ. ລາຄາ, ກຳນົດເວລາປະຕິບັດ, ການຊຳລະສະສາງ, ການນຳສົ່ງ;

ຂອບເຂດ, ປະລິມານ ແລະຄຸນນະພາບຂອງຂໍ້ຜູກພັນ;

ສະຖານທີ່ຂອງການປະຕິບັດຂໍ້ຜູກພັນ ແລະພັນທະໃນການແຈ້ງໃຫ້ແກ່ກັນຊາບ;

ຜົນສະທ້ອນຂອງການລະເມີດຂໍ້ຜູກພັນ, ອົງການທີ່ເປັນຜູ້ແກ້ໄຂຂໍ້ຂັດແຍ່ງ;

ເງື່ອນໄຂຂອງການປ່ຽນແປງ ແລະການສິ້ນສຸດສັນຍາກ່ອນກຳນົດ.

ເປົ້າໝາຍ, ລາຄາ, ກຳນົດເວລາປະຕິບັດແມ່ນເນື້ອໃນອັນຈຳເປັນສຳລັບສັນຍາທຸກປະເພດ.

**ມາດຕາ 12** : ການສະເໜີ ແລະການຮັບຕອບສັນຍາ.

ໃນສັນຍາທາງປາກເປົ່າ ທີ່ຝ່າຍສະເໜີບໍ່ໄດ້ກຳນົດເວລາໃຫ້ຕອບຮັບນັ້ນ ເມື່ອຝ່າຍຖືກສະເໜີໄດ້ຮັບຄຳສະເໜີເວລາໃດ, ຢູ່ບ່ອນໃດກໍສາມາດຕອບຮັບເວລານັ້ນ, ຢູ່ບ່ອນນັ້ນໄດ້ ແລະກໍໃຫ້ຖືວ່າສັນຍານັ້ນ ໄດ້ມີການຕົກລົງກັນ ນັບແຕ່ເວລານັ້ນເປັນຕົ້ນໄປ.

ໃນສັນຍາເປັນລາຍລັກອັກສອນ ທີ່ຝ່າຍສະເໜີບໍ່ໄດ້ກຳນົດເວລາໃຫ້ຕອບຮັບນັ້ນ ຝ່າຍທີ່ໄດ້ຮັບຄຳສະເໜີຕ້ອງສົ່ງຄຳຕອບເຖິງຝ່າຍສະເໜີພາຍໃນກຳນົດ ສາມສິບວັນ ນັບແຕ່ມື້ທີ່ໄດ້ຮັບຄຳສະເໜີເປັນຕົ້ນໄປ.

ຖ້າວ່າຝ່າຍສະເໜີຫາກໄດ້ວາງກຳນົດເວລາໃຫ້ຕອບຮັບແລ້ວ ສັນຍາກໍຈະຖືວ່າໄດ້ມີການຕົກ ລົງກັນ ນັບແຕ່ເວລາທີ່ຄຳຕອບຮັບນັ້ນ ໄດ້ມາເຖິງຝ່າຍສະເໜີພາຍໃນກຳນົດເວລາດັ່ງກ່າວ ແລະຝ່າຍສະເໜີກໍບໍ່ມີສິດຖອນຕົວໄດ້.

ຖ້າວ່າຄຳຕອບຮັບນັ້ນ ຫາກເຮັດຂຶ້ນພາຍໃນກຳນົດເວລາທີ່ສະເໜີ ແຕ່ຄຳຕອບຮັບພັດໄດ້ມາເຖິງມືຝ່າຍສະເໜີຊ້າກວ່າ ສາມສິບວັນ ໃນກໍລະນີທີ່ຝ່າຍສະເໜີຫາກຮັບເອົາກໍໃຫ້ຖືວ່າສັນຍາ ນັ້ນໄດ້ມີການຕົກລົງກັນ.

ຖ້າວ່າຄຳຕອບຮັບນັ້ນຫາກມີຂໍ້ຄວາມເພີ່ມເຕີມ, ຕັດອອກ ຫລື ປ່ຽນແປງ ເມື່ອຜູ້ສະເຫນີເບື້ອງ ຕົ້ນຫາກຕອບຮັບເຫັນດີນຳ ກໍໃຫ້ຖືວ່າສັນຍານັ້ນ ໄດ້ມີການຕົກລົງກັນ.

## ຫມວດທີ III
## ສັນຍາເປັນໂມຄະ

**ມາດຕາ 13** : ສັນຍາທີ່ເປັນ ໂມຄະ.

ສັນຍາທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມເງື່ອນໄຂດັ່ງໄດ້ບົ່ງໄວ້ໃນມາດຕາ 5 ຂອງກົດຫມາຍສະ ບັບນີ້ ຈະຖືວ່າເປັນໂມຄະ.

ສັນຍາອາດຈະເປັນໂມຄະບໍ່ເດັດຂາດ ຫລື ເດັດຂາດ, ເປັນໂມຄະທັງຫມົດ ຫລື ບາງສ່ວນ.

**ມາດຕາ 14** : ສັນຍາທີ່ເປັນໂມຄະບໍ່ເດັດຂາດ ແລະເດັດຂາດ.

1. ສັນຍາທີ່ເປັນໂມຄະບໍ່ເດັດຂາດ ແມ່ນສັນຍາເປັນໂມຄະ ຊຶ່ງພົວພັນເຖິງສິດ ແລະຜົນປະ ໂຫຍດຂອງບຸກຄົນເທົ່ານັ້ນ.

ສັນຍາເປັນໂມຄະບໍ່ເດັດຂາດມີຄື :

ສັນຍາທີ່ເຮັດຂຶ້ນດ້ວຍການຕົວະຍົວະຫລອກຫລວງ ຫລືບັງຄັບນາບຂູ່ ຫລື ເຮັດຂຶ້ນໂດຍຝ່າຍຫນຶ່ງໄດ້ຮັບຄວາມອັບປະໂຫຍດ;

ສັນຍາທີ່ເຮັດຂຶ້ນໂດຍຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;

ສັນຍາທີ່ເຮັດຂຶ້ນໂດຍບຸກຄົນທີ່ຂາດສະຕິສຳນຶກ;

ສັນຍາທີ່ເຮັດຂຶ້ນໂດຍເຈດຕະນາບໍ່ດີຂອງຜູ້ຕາງຫນ້າ;

ສັນຍາທີ່ເຮັດຂຶ້ນໂດຍຄວາມຈຳເປັນໃນສະພາບການທີ່ຫນັກຫນ່ວງເປັນພິເສດ.

ຖ້າວ່າສັນຍາທີ່ເປັນໂມຄະບໍ່ເດັດຂາດນັ້ນ ຫາກມີການເຫັນດີ ຫລື ຮັບຮອງເອົາຈາກຝ່າຍທີ່ເສັຽ ສິດ ແລະຜົນປະໂຫຍດແລ້ວກໍຈະຖືວ່າເປັນສັນຍາທີ່ໃຊ້ໄດ້.

2. ສັນຍາທີ່ເປັນໂມຄະເດັດຂາດແມ່ນສັນຍາທີ່ເປັນໂມຄະຊຶ່ງພົວພັນເຖິງສິດ ແລະຜົນປະໂຫຍດລວມຂອງລັດ ຫລືຂອງສັງຄົມ.

ສັນຍາທີ່ເປັນໂມຄະເດັດຂາດມີຄື :

ສັນຍາທີ່ເຮັດຂຶ້ນໂດຍຂັດກັບຜົນປະໂຫຍດຂອງລັດ ຫລືຂອງສັງຄົມ;

ສັນຍາທີ່ເຮັດຂຶ້ນໂດຍນິຕິບຸກຄົນ ຊຶ່ງຂັດກັບກົດລະບຽບກ່ຽວກັບການຈັດຕັ້ງ ແລະການເຄື່ອນ ໄຫວຂອງຕົນ;

ສັນຍາທີ່ເຮັດຂຶ້ນໂດຍການເຊື່ອງອຳ;

ສັນຍາທີ່ເຮັດຂຶ້ນດ້ວຍການລະເມີດຮູບການຂອງສັນຍາ.

ຄູ່ສັນຍາບໍ່ມີສິດຕົກລົງ ແລະຮັບຮອງເອົາສັນຍາທີ່ເປັນໂມຄະເດັດຂາດນັ້ນໄດ້ແຕ່ຢ່າງໃດ.

**ມາດຕາ 15** : ສັນຍາທີ່ເປັນໂມຄະທັງມົດ ຫລືບາງສ່ວນ.

ໃນກໍລະນີທີ່ເປັນສາເຫດພາໃຫ້ເປັນໂມຄະຫາກພົວພັນກັບທຸກພາກສ່ວນຂອງສັນຍາກໍຈະຖືວ່າສັນຍານັ້ນເປັນໂມຄະທັງຫມົດ ແລະຈະໃຊ້ບໍ່ໄດ້.

ຖ້າວ່າສາເຫດທີ່ພາໃຫ້ເປັນໂມຄະ ຫາກພົວພັນກັບພາກສ່ວນໃດພາກສ່ວນຫນຶ່ງຂອງສັນຍາ ກໍຈະຖືວ່າສັນຍານັ້ນເປັນໂມຄະສະເພາະ ແຕ່ພາກສ່ວນທີ່ກ່ຽວຂ້ອງ ສ່ວນທີ່ເຫລືອນັ້ນກໍຍັງໃຊ້ໄດ້ຢູ່.

**ມາດຕາ 16** : ການຂໍລົບລ້າງສັນຍາທີ່ເປັນໂມຄະ.

ສັນຍາທີ່ເປັນໂມຄະ ອາດຈະຂໍລົບລ້າງໄດ້.

ຖ້າວ່າຄູ່ສັນຍາຝ່າຍໃດຫາກໄດ້ຮູ້ວ່າ ສັນຍາທີ່ເຮັດຂຶ້ນນັ້ນເປັນໂມຄະແລ້ວ ຕ້ອງແຈ້ງໃຫ້ຄູ່ສັນຍາຂອງຕົນຊາບໃນທັນໃດ ເພື່ອທຳການລົບລ້າງສັນຍາດັ່ງກ່າວ.

ໃນກໍລະນີທີ່ຄູ່ສັນຍາຝ່າຍນັ້ນ ຫາກບໍ່ເຫັນດີລົບລ້າງສັນຍານັ້ນແລ້ວ ກໍໃຫ້ຝ່າຍທີ່ແຈ້ງນັ້ນ ຍື່ນຄຳຮ້ອງຕໍ່ສານ ເພື່ອໃຫ້ລົບລ້າງສັນຍາ.

ພໍ່ແມ່ ຫລືຜູ້ປົກຄອງຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ, ຄົນເສັຽຈິດກໍມີສິດຂໍລົບລ້າງສັນຍາດັ່ງກ່າວ.

ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ, ຄົນເສັຽຈິດກໍມີສິດຂໍລົບລ້າງສັນຍາທີ່ຕົນໄດ້ເຮັດຂຶ້ນນັ້ນ ພາຍໃນກຳນົດ ສາມປີ ພາຍຫລັງທີ່ໄດ້ເຖິງກະກຽມອາຍຸ ຫລື ພາຍຫລັງທີ່ຕົນໄດ້ກັບຄືນມາເປັນຜູ້ທີ່ມີຄວາມສາມາດທາງດ້ານການປະພຶດແລ້ວ.

ສຳລັບສັນຍາທີ່ເປັນໂມຄະບໍ່ເດັດຂາດນັ້ນ ມີແຕ່ຄູ່ສັນຍາເທົ່ານັ້ນ ທີ່ຈະຂໍລົບລ້າງໄດ້. ສ່ວນສັນຍາທີ່ເປັນໂມຄະເດັດຂາດທຸກຄົນທີ່ມີຜົນປະໂຫຍດກ່ຽວຂ້ອງ ກໍມີສິດຂໍລົບລ້າງໄດ້.

**ມາດຕາ 17** : ຜົນສະທ້ອນຂອງສັນຍາທີ່ເປັນໂມຄະ.

ໃນເມື່ອຮັບຮູ້ວ່າສັນຍາທີ່ເປັນໂມຄະແລ້ວ

1. ໃຫ້ສິ່ງຊັບສິ່ງຂອງທີ່ໄດ້ປະຕິບັດຕໍ່ກັນແລ້ວນັ້ນຄືນແກ່ຄູ່ສັນຍາທັງສອງຝ່າຍ ໃນກໍລະນີ ທີ່ສັນຍາຫາກໄດ້ເຮັດຂຶ້ນໂດຍບໍ່ສອດຄ່ອງກັບຫລັກການຂອງກົດຫມາຍ, ສັນຍາຂອງນິຕິບຸກຄົນຫາກໄດ້ເຮັດຂຶ້ນໂດຍຂັດກັບຈຸດປະສົງ ຫລື ເປົ້າຫມາຍການເຄື່ອນໄຫວຂອງຕົນ, ສັນຍາທີ່ໄດ້ເຮັດຂຶ້ນໂດຍເດັກທີ່ຍັງບໍ່ທັນເຖິງອາຍຸ, ສັນຍາທີ່ໄດ້ເຮັດຂຶ້ນໂດຍຄົນເສັຽຈິດ, ສັນຍາທີ່ໄດ້ເຮັດຂຶ້ນໂດຍບຸກຄົນທີ່ຂາດສະຕິ ສຳນຶກ, ສັນຍາທີ່ໄດ້ເຮັດຂຶ້ນໂດຍຝ່າຍຫນຶ່ງໄດ້ຮັບຄວາມອັບປະໂຫຍດ.

2. ໃຫ້ສິ່ງຊັບສິ່ງຂອງທີ່ໄດ້ປະຕິບັດແລ້ວນັ້ນ ຄືນແກ່ຝ່າຍທີ່ໄດ້ຮັບຄວາມເສັຽຫາຍ ໃນກໍລະນີທີ່ສັນຍາຫາກໄດ້ເຮັດຂຶ້ນດ້ວຍການຕົວະຍົວະຫລອກຫລວງ ຫລືບັງຄັບນາບຂູ່. ສ່ວນຊັບສິ່ງຂອງທີ່ໄດ້ປະຕິບັດຈາກອີກຝ່າຍຫນຶ່ງນັ້ນໃຫ້ຮິບເປັນຂອງລັດ;

3. ໃນກໍລະນີ ທີ່ສັນຍາຫາກໄດ້ເຮັດຂຶ້ນໂດຍຂັດກັບຜົນປະໂຫຍດຂອງລັດ ຫລື ຂອງສັງຄົມນັ້ນ ກໍໃຫ້ຮິບຊັບສິ່ງຂອງທີ່ໄດ້ປະຕິບັດແລ້ວທັງຫມົດເປັນຂອງລັດ.

## ໝວດທີ 4
## ການປະຕິບັດສັນຍາ

**ມາດຕາ 18** : ຫລັກການຂອງການປະຕິບັດສັນຍາ.

ຄູ່ສັນຍາຕ້ອງປະຕິບັດສັນຍາທີ່ເຊັນກັນແລ້ວນັ້ນດ້ວຍຄວາມຈິງໃຈ ແລະຄົບຖ້ວນຕາມກຳນົດ ເວລາ ແລະໃນສະຖານທີ່ຊຶ່ງໄດ້ບົ່ງໄວ້ໃນສັນຍາ ຫລື ກົດໝາຍ.

ຫ້າມຄູ່ສັນຍາປະຕິເສດການປະຕິບັດຂໍ້ຜູກພັນ ແລະປ່ຽນແປງເງື່ອນໄຂຂອງສັນຍາແຕ່ຝ່າຍດຽວ ເວັ້ນເສັຽແຕ່ກໍລະນີທີ່ກົດໝາຍຫາກໄດ້ອະນຸຍາດໃຫ້. ເຈົ້າໜີ້ມີສິດບໍ່ຮັບເອົາການປະຕິບັດຂໍ້ຜູກພັນທີ່ບໍ່ຄົບຖ້ວນກໍໄດ້ ຖ້າວ່າສັນຍາ ຫລື ກົດໝາຍຫາກບໍ່ໄດ້ບົ່ງໄວ້ຢ່າງອື່ນ.

**ມາດຕາ 19** : ກຳນົດເວລາຂອງການປະຕິບັດຂໍ້ຜູກພັນ.

ຂໍ້ຜູກພັນຕ້ອງໄດ້ດປະຕິບັດຕາມກຳນົດເວລາທີ່ໄດ້ບົ່ງໄວ້ ແລະໃຫ້ສອດຄ່ອງກັບຂໍ້ກຳນົດຂອງສັນຍາ ຫລື ກົດໝາຍ.

ຖ້າວ່າກຳນົດເວລາຂອງການປະຕິບັດຂໍ້ຜູກພັນນັ້ນ ຫາກບໍ່ໄດ້ບົ່ງໄວ້ ເຈົ້າໜີ້ມີສິດທວງໃຫ້ປະຕິບັດ ແລະລູກໜີ້ກໍມີສິດປະຕິບັດໄດ້ດທຸກເວລາ. ໃນກໍລະນີທີ່ເຈົ້າໜີ້ຫາກໄດ້ທວງໃຫ້ປະຕິບັດເວລາ ສິບຫ້າວັນ ນັບແຕ່ມື້ທີ່ເຈົ້າໜີ້ໄດ້ທວງໃຫ້ປະຕິບັດເປັນຕົ້ນໄປ.

ລູກໜີ້ອາດຈະປະຕິບັດຂໍ້ຜູກພັນກ່ອນກຳນົດເວລາກໍໄດ້ເຈົ້າໜີ້ກໍເຫັນດີນຳ.

**ມາດຕາ 20** : ສະຖານທີ່ປະຕິບັດຂໍ້ຜູກພັນ.

ຂໍ້ຜູກພັນຈະປະຕິບັດຢູ່ສະຖານທີ່ຊຶ່ງສັນຍາ ຫລື ກົດໝາຍໄດ້ກຳນົດໄວ້. ຖ້າວ່າສະຖານທີ່ປະຕິບັດຫາກບໍ່ໄດ້ກຳນົດໄວ້ກໍໃຫ້ປະຕິບັດຂໍ້ຜູກພັນຢູ່ສະຖານທີ່ດັ່ງນີ້ :

1. ຂໍຜູກພັນໃນການມອບອາຄານກໍ່ສ້າງໃຫ້ປະຕິບັດຢູ່ສະຖານທີ່ການກໍ່ສ້າງນັ້ນ;

2. ຂໍ້ຜູກພັນທາງດ້ານການເງິນໃຫ້ປະຕິບັດຢູ່ບ່ອນຢູ່ຂອງເຈົ້າໜີ້ ໃນເວລາຂໍ້ຜູກພັນນັ້ນເກີດຂຶ້ນ ເວັ້ນເສັ້ນແຕ່ຂໍ້ຜູກພັນທາງດ້ານການເງິນຂອງອົງການຈັດຕັ້ງຂອງລັດ. ລວມໝູ່ ແລະສັງຄົມເທົ່ານັ້ນ.

ຖ້າວ່າເຈົ້າໜີ້ຫາກໄດ້ຍ້າຍບ່ອນຢູ່ໃນເວລາປະຕິບັດຂໍ້ຜູກພັນ ແລະກໍໄດ້ແຈ້ງໃຫ້ລູກໜີ້ຊາບ ໃນເວລານັ້ນ ຂໍ້ຜູກພັນກໍໃຫ້ປະຕິບັດຢູ່ບ່ອນໃໝ່ຂອງເຈົ້າໜີ້, ສ່ວນການໃຊ້ຈ່າຍທັງໝົດໃນການປະ ຕິບັດຂໍ້ຜູກພັນນັ້ນ ແມ່ນເປັນພາລະຂອງເຈົ້າໜີ້;

3. ຂໍ້ຜູກພັນອື່ນໆ ແມ່ນໃຫ້ປະຕິບັດຢູ່ບ່ອນຢູ່ຂອງລູກໜີ້ໃນເວລາຂໍ້ຜູກພັນນັ້ນໄດ້ເກີດຂຶ້ນ. ຖ້າ ວ່າລູກໜີ້ຫາກແມ່ນນິຕິບຸກຄົນກໍໃຫ້ປະຕິບັດຢູ່ສຳນັກງານຂອງນິຕິບຸກຄົນນັ້ນ.

**ມາດຕາ 21** : ການຊຳລະສະສາງ.

ໃນການຊຳລະສະສາງນັ້ນ ເຈົ້າຫນີ້ຕ້ອງເຮັດໃບຮັບເງິນດ້ວຍຕົນເອງ ຫລື ຕາມຄຳຮ້ອງຂໍຂອງລູກຫນີ້. ໃບຮັບເງິນນີ້ ຕ້ອງເຮັດໃນທັນໃດ ຫລື ຢ່າງຊ້າພາຍໃນສອງອາທິດ ພາຍຫລັງທີ່ໄດ້ປະຕິບັດຂໍ້ຜູກພັນແລ້ວ. ການຊຳລະສະສາງ ຈະມີຂຶ້ນໄດ້ກໍ່ຕໍ່ເມື່ອຫາກໄດ້ມີການເຮັດໃບຮັບເງິນເສັຽກ່ອນ.

ຜູ້ຖືໃບຮັບເງິນນັ້ນ ຖືວ່າເປັນຜູ້ຮັບເງິນໄດ້ຕາມຈຳນວນຊຶ່ງໄດ້ກຳນົດໄວ້ໃນໃບຮັບເງິນ ເວັ້ນເສັຍແຕ່ຫາກໄດ້ກຳນົດໄວ້ຢ່າງອື່ນ.

ການຊຳລະສະສາງອາດຈະປະຕິບັດເປັນເງິນສົດ, ເງິນໂອນ, ເຊັກ ຫລື ວັດຖຸ ຫລືແຮງງານຕາມການຍິນຍອມຂອງເຈົ້າຫນີ້.

ໃນກໍລະນີ ທີ່ມີການຊຳລະສະສາງດ້ວຍເຊັກນັ້ນ ມື້ຊຳລະສະສາງແມ່ນມື້ທີ່ເຈົ້າຫນີ້ໄດ້ຮັບເຊກ. ໃນການຊຳລະສະສາງເປັນເງິນໂອນ ໃຫ້ຖືວ່າມື້ຊຳລະສະສາງ ແມ່ນມື້ທີ່ເຈົ້າຫນີ້ໄດ້ຮັບໃບແຈ້ງມີ, ໃນການຊຳລະສະສາງທາງໄປສະນີ ໃຫ້ຖືວ່າມື້ຊຳລະສະສາງ ແມ່ນມື້ທີ່ລູກຫນີ້ໄດ້ມອບເງິນ ຫລື ຊັບສິ່ງ ຂອງທາງໄປສະນີ.

**ມາດຕາ 22** : ການແຈ້ງຂໍ້ຫຍຸ້ງຍາກໃນການປະຕິບັດສັນຍາ.

ເມື່ອມີຂໍ້ຫຍຸ້ງຍາກເກີດຂຶ້ນ ໃນການປະຕິບັດສັນຍານັ້ນ ເຖິງວ່າຄູ່ສັນຍາຝ່າຍໃດຝ່າຍຫນຶ່ງຫາກ ໄດ້ພະຍາຍາມພຽງໃດກໍບໍ່ສາມາດປະຕິບັດຂໍ້ຜູກພັນຂອງຕົນໄດ້ຢ່າງສະຫມ່ຳສະເຫມີນັ້ນ ຜູ້ກ່ຽວຕ້ອງແຈ້ງສາເຫດຂອງຂໍ້ຫຍຸ້ງຍາກດັ່ງກ່າວໃຫ້ອີກຝ່າຍຫນຶ່ງຊາບ ໃນເວລາອັນເຫມາະສົມກ່ອນກຳນົດເວລາຂອງການປະຕິບັດສັນຍາຈະສິ້ນສຸດ.

ການແຈ້ງຂໍ້ຫຍຸ້ງຍາກນັ້ນ ຈະບໍ່ເປັນສາເຫດທີ່ພາໃຫ້ລູກຫນີ້ພົ້ນຈາກຄວາມຮັບຜິດຊອບຂອງຕົນ ໄປໄດ້, ພາຍຫລັງທີ່ຂໍ້ຫຍຸ້ງຍາກຫາກໄດ້ສິ້ນສຸດລົງແລ້ວ ລູກຫນີ້ກໍຍັງຈະຕ້ອງໄດ້ປະຕິບັດຂໍ້ຜູກພັນໃນສັນຍານັ້ນອີກ.

**ມາດຕາ 23** : ຜົນບັງຄັບຂອງສັນຍາຕໍ່ບຸກຄົນອື່ນ.

ເຈົ້າຫນີ້ມີສິດມອບສິດຂອງຕົນໃຫ້ບຸກຄົນອື່ນ (ເອີ້ນວ່າເຈົ້າຫນີ້ຄົນໃຫມ່ ) ທວງເອົາຊັບສິ່ງຂອງຈາກລູກຫນີ້ທີ່ກ່ຽວຂ້ອງໄດ້.

ເຈົ້າຫນີ້ຕ້ອງມອບເອກະສານຕ່າງໆກ່ຽວກັບການທວງຫນີ້ນັ້ນໃຫ້ເຈົ້າຫນີ້ຄົນໃຫມ່ ແລະຕ້ອງຮັບຜິດຊອບຕໍ່ຜູ້ກ່ຽວ ຖ້າວ່າສິດທີ່ມອບໃຫ້ຜູ້ກ່ຽວນັ້ນ ຫາກບໍ່ມີຄວາມເປັນຈິງ.

ໃນກໍລະນີທີ່ເຈົ້າຫນີ້ຫາກໄດ້ເສັ້ຍຊີວິດໄປແລ້ວ ຜູ້ສືບທອດທີ່ໄດ້ຮັບມູນມໍຣະດົກ ກໍມີສິດທວງເອົາຊັບສິ່ງຂອງຈາກລູກຫນີ້ທີ່ກ່ຽວຂ້ອງນັ້ນໄດ້.

ລູກຫນີ້ກໍມີສິດມອບພັນທະຂອງຕົນໃຫ້ບຸກຄົນອື່ນ (ເອີ້ນວ່າ ລູກຫນີ້ຄົນໃຫມ່ ) ປະຕິບັດແທນຕົນໄດ້ ແຕ່ຕ້ອງໄດ້ຮັບການຕົກລົງເຫັນດີຈາກເຈົ້າຫນີ້ເສັຽກ່ອນ.

ໃນກໍລະນີທີ່ລູກຫນີ້ຫາກໄດ້ເສັຽຊີວິດໄປແລ້ວ, ຜູ້ສືບທອດທີ່ໄດ້ຮັບມໍຣະດົກກໍຈະໄດ້ປະຕິບັດພັນທະແທນຜູ້ກ່ຽວ.

## ໝວດທີ 5
## ມາດຕະການຮັບປະກັນ ການປະຕິບັດສັນຍາ

**ມາດຕາ 24** : ການຮັບປະກັນການປະຕິບັດສັນຍາ.

ໃນການຮັບປະກັນການປະຕິບັດສັນຍາຢ່າງສົມເຫດສົມຜົນ, ເພື່ອຕອບສະໜອງຄວາມຕ້ອງ ການຂອງເຈົ້າໜີ້ ຫລືທົດແທນຄ່າເສັຽຫາຍ ຊຶ່ງອາດຈະເກີດຂຶ້ນພາຍຫລັງການບໍ່ປະຕິບັດສັນຍາ ຫລື ການປະຕິບັດສັນຍາຢ່າງບໍ່ສົມເຫດສົມຜົນນັ້ນ ກົດໝາຍໄດ້ອະນຸຍາດໃຫ້ນຳໃຊ້ວິທີການຕ່າງໆເຊັ່ນ : ການຊວດຈຳ, ການຄ້ຳປະກັນ, ການປັບໃໝ.

**ມາດຕາ 25** : ການຊວດຈຳ

ການຊວດຈຳ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍໜຶ່ງ ( ເອີ້ນວ່າ ຜູ້ຊວດຈຳ ) ໄດ້ເອົາຊັບ ສິ່ງຂອງໄປຈຳໄວ້ນຳອີກຝ່າຍໜຶ່ງ ( ເອີ້ນວ່າຜູ້ຮັບຊວດຈຳ ) ເພື່ອຮັບປະກັນການໃຊ້ແທນໜີ້ສິນ ແລະຜູ້ຊວດຈຳມີສິດໄຖ່ເອົາຄືນຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນສັນຍາກູ້ຢືມ.

ຖ້າວ່າຜູ້ຊວດຕຳຫາກບໍ່ໄຖ່ເອົາຊັບສິ່ງຂອງນັ້ນຕາມກຳນົດເວລາ ຊຶ່ງໄດ້ຕົກລົງກັນແລ້ວ ຊັບສິ່ງ ຂອງທີ່ຊວດຈຳນັ້ນ ກໍຈະຕົກເປັນກຳມະສິດຂອງຜູ້ຮັບຊວດຈຳ. ໃນກໍລະນີທີ່ຊັບສິ່ງຂອງທີ່ນຳໄປຊວດຈຳນັ້ນຫາກມີລາຄາສູງກວ່າໜີ້ສິນແລ້ວ ຜູ້ຮັບຊວດຈຳອາດຈະເສັຽເງິນເອົາ ຫລື ເອົາຊັບສິ່ງຂອງເຫລົ່າ ນັ້ນໄປຂາຍກໍໄດ້ ພາຍຫລັງທີ່ໄດ້ຫັກເອົາຕົ້ນທຶນ ແລະດອກເບັ້ຽແລ້ວ ເງິນທີ່ເຫລືອນັ້ນຕ້ອງສົ່ງຄືນໃຫ້ຜູ້ຊວດຈຳ.

ຖ້າວ່າຈຳນວນເງິນທີ່ໄດ້ຂາຍຊັບສິ່ງຂອງ ຊຶ່ງເອົາໄປຊວດຈຳນັ້ນ ຫາກບໍ່ພຽງພໍເພື່ອໃຊ້ແທນຜູ້ຮັບຊວດຈຳແລ້ວ ຜູ້ກ່ຽວກໍມີສິດທວງເອົາເງິນ ຈຳນວນທີ່ບໍ່ພໍນັ້ນ ຈາກຜູ້ຊວດຈຳຕື່ມອີກ.

**ມາດຕາ 26** : ຮູບການຂອງການຊວດຈຳ ແລະຊັບສິ່ງຂອງທີ່ນຳໄປຊວດຈຳ.

ການຊວດຈຳຕ້ອງເຮັດເປັນລາຍລັກອັກສອນ ແລະອາດຈະເຮັດພ້ອມກັນກັບສັນຍາກູ້ຢືມ ຫລື ລຸນຫລັງກໍໄດ້. ສັນຍາຊວດຈຳອາດຈະເຮັດໃສ່ໃບດຽວກັນກັບສັນຍາກູ້ຢືມ ຫລື ເຮັດໃສ່ໃບໜຶ່ງຕ່າງ ຫາກກໍໄດ້.

ຊັບສິ່ງຂອງທີ່ເອົາໄປຊວດຈຳນັ້ນ ຕ້ອງເປັນກຳມະສິດຂອງຜູ້ຊວດຈຳ. ຜູ້ນຳຊັບສິ່ງຂອງໄປຊວດຈຳນັ້ນ ອາດຈະແມ່ນຜູ້ຊວດຈຳເອງ ຫລື ບຸກຄົນອື່ນກໍໄດ້.

**ມາດຕາ 27** : ສິດ ແລະພັນທະຂອງຜູ້ຮັບຊວດຈຳ ແລະຜູ້ຊວດຈຳ.

ໃນກໍລະນີ ທີ່ຊັບສິ່ງຂອງທີ່ຊວດຈຳນັ້ນ ຫາກໄດ້ເກີດຜົນຢ່າງໃດຢ່າງໜຶ່ງຂຶ້ນ ກໍຈະເປັນກຳມະສິດຂອງຜູ້ຊວດຈຳ.ຖ້າວ່າຜູ້ຮັບຊວດຈຳຫາກຕ້ອງການໝາກຜົນດັ່ງກ່າວແລ້ວ ກໍໃຫ້ຜູ້ກ່ຽວເສັຽເງິນເອົາ.

ຜູ້ຮັບຊວດຈຳມີພັນທະປົກປັກຮັກສາ ແຕ່ບໍ່ມີສິດນຳໃຊ້ຊັບສິ່ງຂອງດັ່ງກ່າວຕະຫລອດເວລາຊວດຈຳ ເວັ້ນເສັຽແຕ່ໃນກໍລະນີທີ່ໄດ້ບົ່ງໄວ້ໃນສັນຍາ.

ຖ້າວ່າຊັບສິ່ງຂອງທີ່ຊວດຈຳຫາກໄດ້ຖືກເສັຽຫາຍ ຫລື ເປ່ເພຍ້ອນຄວາມຜິດຂອງຜູ້ຮັບຊວດຈຳ ແລ້ວຜູ້ກ່ຽວຕ້ອງຮັບຜິດຊອບເວັ້ນເສັຽແຕ່ມີເຫດບັງເອີນ ຫລື ເຫດສຸດວິໄສເກີດຂຶ້ນ.

ໃນກໍລະນີທີ່ຜູ້ຮັບຊວດຈຳຫາກໄດ້ໃຊ້ຈ່າຍໃນການປົກປັກຮັກສາຊັບສິ່ງຂອງທີ່ຊວດຈຳແລ້ວ ຜູ້ກ່ຽວກໍມີສິດທວງເອົາຄ່າໃຊ້ຈ່າຍນັ້ນຄືນ.

ຜູ້ຊວດຈຳມີສິດໄຖ່ເອົາຊັບສິ່ງຂອງທີ່ຊວດຈຳນັ້ນຄືນຕາມກຳນົດເວລາທີ່ໄດ້ຕົກລົງກັນ.

ຖ້າວ່າຜູ້ຊວດຈຳຫາກໄດ້ເສັຽຊີວິດກ່ອນກຳນົດເວລາໄຖ່ເອົາຊັບສິ່ງຂອງ ທີ່ຊວດຈຳນັ້ນຄືນ ຜູ້ສືບທອດຂອງຜູ້ກ່ຽວກໍມີສິດໄຖ່ເອົາຊັບສິ່ງຂອງນັ້ນໄດ້.

**ມາດຕາ 28** : ບູລິມະສິດ ໃນການໃຊ້ແທນໜີ້ສິນ.

ເຈົ້າໜີ້ຜູ້ໃດທີ່ໄດ້ມີຊັບສິ່ງຂອງຊວດຈຳໄວ້ນັ້ນຈະເປັນຜູ້ມີບູລິມະນິດໃນການໄດ້ຮັບການໃຊ້ແທນໜີ້ສິນກ່ອນເຈົ້າໜີ້ຄົນອື່ນ ຊຶ່ງບໍ່ມີຊັບສິ່ງຂອງຊວດຈຳໄວ້.

ຊັບສິ່ງຂອງທີ່ຊວດຈຳໄວ້ນັ້ນ ໃຫ້ນຳໄປຂາຍ ແລ້ວມາຄິດໄລ່ໃຊ້ແທນໜີ້ສິນຂອງເຈົ້າໜີ້ຜູ້ທີ່ມີຊັບສິ່ງຂອງທີ່ຊວດຈຳໄວ້ຈົນຄົບເສັຽກ່ອນ ສ່ວນເຫລືອນັ້ນໃຫ້ຄິດໄລ່ໃຊ້ແທນໜີ້ສິນຂອງເຈົ້າໜີ້ຄົນອື່ນໆ.

**ມາດຕາ 29** : ການຄ້ຳປະກັນດ້ວຍຫລັກຊັບ.

ການຄ້ຳປະກັນດ້ວຍຫລັກຊັບ ແມ່ນ ການຄ້ຳປະກັນຊຶ່ງລູກໜີ້ບໍ່ໄດ້ເອົາຊັບສິ່ງຂອງໄປໄວ້ນຳເຈົ້າໜີ້ບໍ່ໄດ້ເອົາຊັບສິ່ງຂອງໄປໄວ້ນຳເຈົ້າໜີ້ ຫາກພຽງແຕ່ໄດ້ເອົາເອກະສານຢັ້ງຢືນກຳມະສິດ ກ່ຽວກັບຊັບສິ່ງຂອງນັ້ນໄປຄ້ຳປະກັນໄວ້ນຳເຈົ້າໜີ້ເທົ່ານັ້ນ.

**ມາດຕາ 30** : ການຄ້ຳປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນ.

ການຄ້ຳປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນ ແມ່ນການຄ້ຳປະກັນ ຊຶ່ງບຸກຄົນໃດບຸກຄົນໜຶ່ງ ຫລື ນິຕິບຸກຄົນໃດໜຶ່ງ ໄດ້ຕົກລົງຮັບປະກັນໃຊ້ໜີ້ສິນແທນລູກໜີ້ ໃນເມື່ອລູກໜີ້ນັ້ນ ຫາກບໍ່ໄດ້ປະຕິ ບັດຕາມສັນຍາຜູ້ຢືມ.

ໃນການຄ້ຳປະກັນໜີ້ສິນໃຫ້ແກ່ລູກໜີ້ນັ້ນຜູ້ຄ້ຳປະກັນອາດຈະຄ້ຳປະກັນໜີ້ສິນທັງໝົດ ຫລື ສ່ວນໃດສ່ວນໜຶ່ງກໍໄດ້. ເມື່ອເຖິງກຳນົດເວລາທີ່ໄດ້ບົ່ງໄວ້ສັນຍາແລ້ວເຈົ້າໜີ້ຕ້ອງທວງທາວເອົານຳລູກໜີ້ເສັຽກ່ອນ ຖ້າວ່າລູກໜີ້ຫາກບໍ່ໃຊ້ແທນໜີ້ສິນແລ້ວເຈົ້າໜີ້ ຈຶ່ງມີສິດທວງທາວເອົານຳຜູ້ຄ້ຳປະກັນໄດ້.

ຜູ້ຄ້ຳປະກັນຕ້ອງໃຊ້ໜີ້ສິນແທນລູກໜີ້ທັງໝົດ ຫລື ສ່ວນໃດສ່ວນໜຶ່ງຕາມທີ່ໄດ້ຕົກລົງກັນໃນສັນຍາ.

ໃນການໃຊ້ແທນໜີ້ສິນນັ້ນ ຜູ້ຄ້ຳປະກັນມີພັນທະໃຊ້ແທນພຽງແຕ່ຕົ້ນທຶນເທົ່ານັ້ນ ສ່ວນດອກ ເບັ້ຽ ແລະຄ່າທຳນຽມຕ່າງໆ ແມ່ນຕົກເປັນພາລະຂອງລູກໜີ້ ເວັ້ນເສັຽແຕ່ໄດ້ຕົກລົງກັນໄວ້ໃນສັນຍາ.

ໃນກໍລະນີທີ່ລູກໜີ້ຫາກມີຄວາມສາມາດໃຊ້ແທນໜີ້ສິນໄດດ້ພຽງແຕ່ສ່ວນໃດສ່ວນໜຶ່ງເທົ່າ ນັ້ນ ຜູ້ຄ້ຳປະກັນກໍຕ້ອງໃຊ້ແທນສ່ວນທີ່ຍັງເຫລືອຢູ່ນັ້ນ. ຜູ້ຄ້ຳປະກັນທີ່ໄດ້ໃຊ້ໜີ້ສິນແທນລູກໜີ້ແລ້ວ ນັ້ນ ກໍກາຍເປັນເຈົ້າໜີ້ຂອງລູກໜີ້ຜູ້ນັ້ນ ແລະມີສິດທວງເອົາຕົ້ນທຶນທີ່ຕົນເອງໄດ້ຈ່າຍໄປແລ້ວ ລວມ ທັງດອກ

ເບັ້ງອີກດ້ວຍ. ຜູ້ຄ້ຳປະກັນມີສິດປົກປ້ອງລູກໜີ້ທີ່ຕົນຄ້ຳປະກັນນັ້ນ. ລູກໜີ້ ແລະຜູ້ຄ້ຳປະກັນມີພັນທະແຈ້ງໃຫ້ກັນຊາບກ່ຽວກັບການໃຊ້ແທນໜີ້ສິນຂອງຕົນ.

**ມາດຕາ 31** : ການປັບໃໝ.

ການປັບໃໝແມ່ນມາດຕະການປະຕິບັດຕໍ່ຜູ້ບໍ່ປະຕິບັດສັນຍາ ຫລື ປະຕິບັດສັນຍາບໍ່ຄົບຖ້ວນ ຫລື ປະຕິບັດບໍ່ທັນຕາມກຳນົດເວລາ.

ການປັບໃໝໃຫ້ປະຕິບັດຕາມລະບຽບການສະເພາະຂອງຂະແໜງການທີ່ກ່ຽວຂ້ອງ ຫລື ຕາມການຕົກລົງຂອງຄູ່ສັນຍາໃນກໍລະນີທີ່ບໍ່ມີລະບຽບການສະເພາະ.

## ໝວດທີ VI
## ການປ່ຽນແປງ, ການຍົກເລີກ ແລະການສິ້ນສຸດສັນຍາ.

**ມາດຕາ 32** : ການປ່ຽນແປງ ຫລື ການຍົກເລີກສັນຍາ.

ສັນຍາທີ່ເຮັດຂຶ້ນນັ້ນ ຈະປ່ຽນແປງ ຫລື ຍົກເລີກກໍໄດ້ຖ້າວ່າຄູ່ສັນຍາຫາກໄດ້ຕົກລົງເຫັນດີນຳກັນ.

ຖ້າວ່າມີການລະເມີດສັນຍາຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດນັ້ນຈະປ່ຽນແປງ ຫລື ຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້.

ການປ່ຽນແປງ ຫລື ການຍົກເລີກສັນຍາທີ່ເປັນລາຍລັກອັກສອນຕ້ອງເຮັດເປັນລາຍລັກອັກສອນ.

ໃນເມື່ອສັນຍາຫາກຖືກຍົກເລີກ ສິ່ງທີ່ໄດ້ປະຕິບັດຕໍ່ກັນແລ້ວກໍໃຫ້ແລ້ວກັນໄປ.ຖ້າວ່າຝ່າຍໜຶ່ງຫາກໄດ້ປະຕິບັດພັນທະຂອງຕົນກ່ອນແລ້ວ ຝ່າຍທີ່ຍັງຄ້າງຄານັ້ນຕ້ອງໄດ້ປະຕິບັດຕອບແທນ. ສຳລັບ ພັນທະທີ່ຍັງບໍ່ທັນໄດ້ປະຕິບັດຕໍ່ກັນນັ້ນ ກໍໃຫ້ເລີກແລ້ວຕໍ່ກັນໄປ.

**ມາດຕາ 33** : ການສິ້ນສຸດສັນຍາ.

ສັນຍາຈະສິ້ນສຸດລົງໃນກໍລະນີດັ່ງນີ້ :

ສັນຍາທີ່ໄດ້ປະຕິບັດຢ່າງຖືກຕ້ອງ ແລະຄົບຖ້ວນແລ້ວ;

ຄູ່ສັນຍາໄດ້ເຂົ້າຮ່ວມເປັນອັນດຽວກັນ;

ຄູ່ສັນຍາໄດ້ມີການຕົກລົງກັນ;

ສັນຍາບໍ່ສາມາດປະຕິບັດໄດ້;

ຄູ່ສັນຍາຝ່າຍໃດຝ່າຍໜຶ່ງໄດ້ເສັຽຊີວິດ ຊຶ່ງບຸກຄົນອື່ນບໍ່ສາມາດສືບຕໍ່ປະຕິບັດໄດ້;

ນິຕິບຸກຄົນທີ່ເປັນຄູ່ສັນຍາໄດ້ຖືກຍຸບເລີກ ຫລື ລົ້ມລະລາຍນັ້ນ.

## ໝວດທີ VII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 34** : ວິທີແກ້ໄຂຂໍ້ຂັດແຍ່ງ.

ໃນການປະຕິບັດສັນຍາ ຄູ່ສັນຍາອາດຈະຕົກລົງກັນບໍ່ໄດ້ໃນບາງກໍລະນີ, ເມື່ອຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ຫາກເຫັນວ່າຕົນໄດ້ຮັບຄວາມອັບປະໂຫຍດຈາກສັນຍາແລ້ວ ເຊັ່ນ ສັນຍາເປັນໂມຄະ, ການບໍ່ປະຕິບັດສັນຍາ, ການປະຕິບັດສັນຍາບໍ່ຄົບຖ້ວນຝ່າຍນັ້ນກໍມີສິດສະເໜີໃຫ້ອີກຝ່າຍໜຶ່ງແກ້ໄຂ. ຖ້າວ່າຄູ່ສັນຍາຝ່າຍທີ່ຖືກສະເໜີຫາກບໍ່ເຫັນດີແລ້ວ ຝ່າຍສະເໜີກໍມີສິດຮ້ອງຟ້ອງຕໍ່ສານໃຫ້ທຳການແກ້ໄຂຂໍ້ຂັດແຍ່ງນັ້ນ. ໃນກໍລະນີ ທີ່ແມ່ນຂໍ້ຂັດແຍ່ງທາງເສດຖະກິດລະຫວ່າງ ອົງການຈັດຕັ້ງດ້ວຍກັນ ຫລື ລະຫວ່າງອົງການຈັດຕັ້ງ, ຫົວໜ່ວຍເສດຖະກິດກັບຕ່າງປະເທດນັ້ນ ໃຫ້ອົງການໄກ່ເກັ່ຍເສດຖະກິດເປັນ ຜູ້ແກ້ໄຂ.

**ມາດຕາ 35** : ອາຍຸຄວາມໃນການຮ້ອງຟ້ອງ.

ອາຍຸຄວາມໃນການຮ້ອງຟ້ອງ ມີກຳນົດສິບປີ ສຳລັບສັນຍາກ່ຽວກັບການກໍ່ສ້າງ ແລະສາມປີ ສຳລັບສັນຍາອື່ນໆ ເຊັ່ນ : ສັນຍາກູ້ຢືມ, ເຊົ່າຊື້ບສິ່ງຂອງ.

ອາຍຸຄວາມໃນການຮ້ອງຟ້ອງໃຫ້ເລີ່ມນັບແຕ່ມື້ກຳນົດເວລາຂອງສັນຍານັ້ນສິ້ນສຸດເປັນຕົ້ນໄປ.

ອາຍຸຄວາມໃນການຮ້ອງຟ້ອງຈະຖືກໂຈະໃນກໍລະນີມີເຫດບັງເອີນຫລືເຫດສຸດວິໄສ ຊຶ່ງເປັນອຸບປະສັກຕໍ່ການຍື່ນຄຳຮ້ອງຟ້ອງ;

ໂຈດ ຫລື ຈຳເລີຍ ທີ່ສັງກາດຢູ່ໃນກຳລັງປະກອບອາວຸດ ຖືກໄປແນວໜ້າ ຫລືສົງຄາມ.

ພາຍຫລັງທີ່ໄລຍະເວລາຂອງການໂຈະນັ້ນໄດ້ສິ້ນສຸດແລ້ວອາຍຸຄວາມທີ່ໄດ້ຜ່ານມາກ່ອນນັ້ນ ຈະສືບຕໍ່ອີກ.

ອາຍຸຄວາມໃນການຮ້ອງຟ້ອງຈະຖືກຢຸດສະງັກ, ໃນເມື່ອມີການກະທຳອັນແນ່ນອນຂອງຄູ່ຄວາມ ຫລື ຄູ່ສັນຍາ ເຊັ່ນ : ການຮັບຮູ້ໜີ້ສິນຂອງຕົນ. ໃນກໍລະນີນີ້ ອາຍຸຄວາມໃນການຮ້ອງຟ້ອງໃຫ້ເລີ້ມນັບຄືນໃໝ່.

**ມາດຕາ 36** : ຜົນສະທ້ອນຂອງການລະເມີດສັນຍາ.

ການລະເມີດສັນຍາ ແມ່ນ ການບໍ່ປະຕິບັດຂໍ້ຜູກພັນທັງໝົດ ຫລື ບາງສ່ວນ ຫລື ການປະຕິບັດຂໍ້ຜູກພັນຢ່າງບໍ່ສົມເຫດສົມຜົນໂດຍຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ເຊັ່ນ ການປະຕິບັດຂໍ້ຜູກພັນບໍ່ມີຄຸນນະ ພາບບໍ່ທັນກັບເວລາ, ບໍ່ຖືກສະຖານທີ່ຊຶ່ງບົ່ງໄວ້ໃນສັນຍາ.

ຖ້າວ່າຄູ່ສັນຍາຝ່າຍໃດຝ່າຍໜຶ່ງຫາກໄດ້ລະເມີດສັນຍາຝ່າຍນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍທີ່ເກີດຂຶ້ນ ເວັ້ນເສັຽແຕ່ການລະເມີດສັນຍານັ້ນ ຫາກເກີດຂຶ້ນຍ້ອນເຫດບັງເອີນ ຫລື ເຫດສຸດວິ ໄສ ເຊັ່ນ : ຟ້າຜ່າ, ນ້ຳຖ້ວມ, ແຜ່ນດິນໄຫວ ແລະອື່ນໆ.

## ພາກທີ II
## ວ່າດ້ວຍປະເພດສັນຍາ

## ໝວດທີ 1
## ສັນຍາຊື້ຂາຍ ແລະ ແລກປ່ຽນ

**ມາດຕາ 37** : ສັນຍາຊື້ຂາຍ.

ສັນຍາຊື້ຂາຍ ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຂາຍຕ້ອງມອບຊັບສິ່ງຂອງໃຫ້ຜູ້ຊື້ເປັນກຳມະສິດ ແລະຜູ້ຊື້ຕ້ອງຮັບເອົາຊັບສິ່ງຂອງ ແລະຈ່າຍເງິນຕາມລາຄາທີ່ໄດ້ຕົກລົງກັນ.

ຜູ້ຂາຍຈະຂາຍຊັບສິ່ງຂອງອັນໃດກໍໄດ້ ທີ່ເປັນກຳມະສິດຂອງຕົນ.

ໃນການເຮັດສັນຍາຜູ້ຂາຍຕ້ອງແຈ້ງໃຫ້ຜູ້ຊື້ຊາບກ່ຽວກັບສິດຂອງບຸກຄົນອື່ນໃນຊັບສິ່ງຂອງທີ່ຂາຍ ເຊັ່ນ : ຊັບສິ່ງຂອງທີ່ຂາຍນັ້ນຍັງມີຜູ້ເຊົ່າຢູ່. ການບໍ່ແຈ້ງໃຫ້ຊາບນີ້ ຈະພາໃຫ້ຜູ້ຊື້ມີສິດຮ້ອງຂໍລົບລ້າງສັນຍາ ແລະຮ້ອງຂໍເອົາຄ່າເສັຍຫາຍ ຫລືຫລຸດຜ່ອນລາຄາຊື້. ຖ້າວ່າຊັບສິ່ງຂອງທີ່ຂາຍໃຫ້ຜູ້ຊື້ນັ້ນ ຫາກຖືກຣິບຕາມຄຳຕັດສິນຂອງສານ ຫລື ອີງການໄກ່ເກັ່ຍເສດຖະກິດແລ້ວ ຜູ້ຂາຍຕ້ອງທົດແທນຄ່າເສັຍຫາຍໃຫ້ແກ່ຜູ້ຊື້.

ເມື່ອສິດກ່ຽວກັບກຳມະສິດຫາກເປັນຂອງຜູ້ຊື້ກ່ອນການມອບຊັບສິ່ງຂອງແລ້ວ ຜູ້ຂາຍຍັງມີພັນ ທະຮັກສາຊັບສິ່ງຂອງດັ່ງກ່າວ ໂດຍບໍ່ໃຫ້ມີການເສັຍຫາຍ ຫລື ເປ່ເພຈົນກວ່າຜູ້ຊື້ຈະຮັບເອົາ.

ຜູ້ຊື້ເປັນເຈົ້າກຳມະສິດໃນຊັບສິ່ງຂອງທີ່ຕົນໄດ້ຊື້ນັ້ນ ນັບແຕ່ເວລາຜູ້ຊື້ ແລະຜູ້ຂາຍໄດ້ຈ່າຍເງິນເປັນຕົ້ນໄປ ເຖິງວ່າຜູ້ຂາຍຍັງບໍ່ທັນໄດ້ມອບຊັບສິ່ງຂອງໃຫ້ກໍຕາມ ຫລື ນັບແຕ່ເວລາຜູ້ຂາຍໄດ້ມອບຊັບ ສິ່ງຂອງໃຫ້ແລ້ວ ແຕ່ຜູ້ຊື້ຍັງບໍ່ທັນໄດ້ຈ່າຍເງິນກໍຕາມ.

ຜູ້ຊື້ມີພັນທະຈ່າຍ ແລະຮັບເອົາຊັບສິ່ງຂອງຕາມທີ່ໄດ້ບົ່ງໄວ້ໃນສັນຍາ.

**ມາດຕາ 38** : ຄຸນນະພາບຂອງຊັບສິ່ງຂອງທີ່ຂາຍ.

ຄຸນນະພາບຂອງຊັບສິ່ງຂອງທີ່ຂາຍຕ້ອງໃຫ້ຖືກຕ້ອງຕາມເນື້ອໃນຂອງສັນຍາ. ຖ້າວ່າຊັບສິ່ງຂອງທີ່ຂາຍນັ້ນ ຫາກບໍ່ມີຄຸນນະພາບຕາມທີ່ໄດ້ບົ່ງໄວ້ໃນສັນຍາແລ້ວຜູ້ຂາຍຕ້ອງຮັບຜິດຊອບຕໍ່ຊັບສິ່ງຂອງ ດັ່ງກ່າວ.

ໃນກໍລະນີທີ່ຜູ້ຊື້ຫາກໄດ້ຮູ້ວ່າ ຊັບສິ່ງຂອງນັ້ນບໍ່ມີຄຸນນະພາບແລ້ວ ຜູ້ຊື້ມີສິດຂໍປ່ຽນເອົາຊັບສິ່ງຂອງປະເພດດຽວກັນ ທີ່ມີຄຸນນະພາບ ຫລື ຂໍຫລຸດລາຄາ ຫລື ລົບລ້າງສັນຍາ ພ້ອມທັງທວງເອົາການໃຊ້ ແທນຄ່າເສັຍຫາຍ.

ຜູ້ຊື້ມີພັນທະກວດເບິ່ງຊັບສິ່ງຂອງທີ່ຊື້ ແລະຕ້ອງແຈ້ງໃຫ້ຜູ້ຂາຍຊາບຢ່າງຮີບດ່ວນ ໃນກໍລະນີທີ່ມີການຊອກເຫັນຄວາມບົກຜ່ອງໃນຊັບສິ່ງຂອງທີ່ຊື້ ຖ້າບໍ່ດັ່ງນັ້ນ ຜູ້ຊື້ຕ້ອງຮັບຜິດຊອບເອົາເອງຕໍ່ຄວາມບົກຜ່ອງເຫລົ່ານັ້ນ.

**ມາດຕາ 39** : ການຂາຍສິນຄ້າເປັນເງິນເຊື່ອ.

ໃນການຊື້ຂາຍສິນຄ້ານັ້ນຜູ້ຂາຍອາດຈະຂາຍສິນຄ້າເປັນເງິນເຊື່ອກໍໄດ້. ຜູ້ຊື້ມີສິດຍຶດຖືກຳມະ ສິດກ່ຽວກັບສິນຄ້າທີ່ຂາຍເປັນເງິນເຊື່ອນັ້ນ ນັບແຕ່ມື້ທີ່ຜູ້ຂາຍໄດ້ມອບຊັບສິ່ງຂອງໃຫ້ເປັນຕົ້ນໄປຖ້າວ່າກົດໝາຍ ຫລື ສັນຍາຫາກບໍ່ໄດ້ບົ່ງໄວ້ຢ່າງອື່ນ.

ຖ້າວ່າຊັບສິ່ງຂອງນັ້ນ ຫາກຍັງຕ້ອງຈົດທະບຽນຢູ່ ສິດກ່ຽວກັບກຳມະສິດຂອງຜູ້ຊື້ກໍມີຂຶ້ນນັບແຕ່ມື້ໄດ້ຈົດທະບຽນເປັນຕົ້ນໄປ.

ການຂາຍສິນຄ້າເປັນເງິນເຊື່ອ ຈະຕ້ອງປະຕິບັດຕາມລາຄາທີ່ໄດ້ຕົກລົງກັນໃນມື້ຂາຍນັ້ນ. ການປ່ຽນແປງລາຄາສິນຄ້າທີ່ຂາຍເປັນເງິນເຊື່ອ ໃນເວລາຕໍ່ມາກໍຈະບໍ່ພາໃຫ້ລາຄາທີ່ໄດ້ຕົກລົງກັນແລ້ວນັ້ນ ມີການປ່ຽນແປງແຕ່ຢ່າງໃດ.

**ມາດຕາ 40** : ການຊື້ຊັບສິ່ງຂອງທີ່ໄດ້ມາຢ່າງຜິດກົດຫມາຍ.

ບຸກຄົນຜູ້ໃດຫາກໄດ້ຊື້ຊັບສິ່ງຂອງໂດຍຄວາມບໍລິສຸດໃຈໃນລາຄາອັນເຫມາະສົມຕາມທ້ອງຕະຫລາດ ໃນເວລານັ້ນ, ຊື້ ແລະນຳໃຊ້ຊັບສິ່ງຂອງຢ່າງເປີດເຜີຍ, ລຽນຕິດ ແລະສະຫງົບແລ້ວເຈົ້າຂອງຊັບຈະເອົາຊັບສິ່ງຂອງນັ້ນຄືນໄດ້ກໍຕໍ່ເມື່ອຫາກຜູ້ກ່ຽວໄດ້ທົດແທນລາຄາທີ່ຜູ້ຊື້ໄດ້ຈ່າຍໄປແລ້ວນັ້ນ ແຕ່ຕົນ ກໍມີສິດຮ້ອງຟ້ອງເອົານຳຜູ້ຂາຍຕໍ່ໄປ.

ໃນກໍລະນີທີ່ຜູ້ຊື້ຫາກໄດ້ຊື້ຊັບສິ່ງຂອງໂດຍບໍ່ມີຄວາມບໍລິສຸດໃຈແລ້ວ ເຈົ້າຂອງຊັບມີສິດເອົາຊັບສິ່ງຂອງນັ້ນຄືນໂດຍບໍ່ມີການທົດແທນຄ່າຊັບສິ່ງຂອງແກ່ຜູ້ຊື້ແຕ່ຢ່າງໃດ. ຜູ້ຊື້ຈະຕໍ່ວ່າເອົາເງິນ ທີ່ຊື້ ຊັບສິ່ງຂອງນັ້ນຄືນ ນຳຜູ້ຂາຍກໍໄດ້ ແຕ່ຜູ້ກ່ຽວບໍ່ມີສິດຮ້ອງຟ້ອງຕໍ່ສານ.

**ມາດຕາ 41** : ການນຳສົ່ງສິນຄ້າ ຫລື ຊັບສິ່ງຂອງທີ່ຂາຍ.

ຜູ້ຂາຍຈະນຳສົ່ງສິນຄ້າ ຫລື ຊັບສິ່ງຂອງທີ່ຂາຍນັ້ນ ໄປຮອດບ່ອນຢູ່ຂອງຜູ້ຊື້ ຫລື ສະຖານທີ່ແຫ່ງໃດແຫ່ງຫນຶ່ງ ຕາມທີ່ໄດ້ຕົກລົງກັນ.

ຜູ້ຊື້ມີພັນທະຮັບເອົາສິນຄ້າ ຫລື ຊັບສິ່ງຂອງທີ່ນຳສົ່ງມາໃຫ້ຕົນ. ສ່ວນການໃຊ້ຈ່າຍຄ່ານຳສົ່ງນັ້ນແມ່ນຂຶ້ນກັບການຕົກລົງຂອງຄູ່ສັນຍາ.

ຖ້າວ່າຜູ້ຂາຍຫາກບໍ່ນຳສົ່ງສິນຄ້າ ຫລື ຊັບສິ່ງຂອງທີ່ຂາຍຕາມກຳນົດເວລາ ຊຶ່ງໄດ້ຕົກລົງກັນແລ້ວນັ້ນ ຜູ້ຊື້ຈະບໍ່ຮັບເອົາສິນຄ້າ ຫລືຊັບສິ່ງຂອງນັ້ນກໍໄດ້.

ໃນກໍລະນີ ທີ່ຜູ້ຊື້ຫາກໄດ້ຈ່າຍຄ່ານຳສົ່ງແລ້ວ ຜູ້ຊື້ຈະໃຫ້ຜູ້ຂາຍຈ່າຍຄ່າດອກເບັ້ຽຕາມກົດຫມາຍແລະຕາມຈຳນວນມື້ທີ່ໄດ້ຊັກຊ້າ.

ຖ້າວ່າຜູ້ຂາຍຫາກໄດ້ນຳສົ່ງສິນຄ້າ ຫລື ຊັບສິ່ງຂອງທີ່ຂາຍນັ້ນ ບໍ່ຄົບຕາມປະລິມານ, ບໍ່ຄົບຊຸດ, ບໍ່ມີຄຸນນະພາບ ຕາມທີ່ໄດ້ຕົກລົງຊື້ຂາຍກັນ ຜູ້ຊື້ຈະບໍ່ຮັບເອົາ ແລະຈະບໍ່ຈ່າຍຄ່າສິນຄ້ານັ້ນ ກໍໄດ້. ຖ້າວ່າຜູ້ຊື້ຫາກໄດ້ຈ່າຍຄ່າສິນຄ້າ ນັ້ນແລ້ວ ຜູ້ຂາຍຈະໄດ້ສົ່ງເງິນຄືນ ແລະອາດຈະຈ່າຍຄ່າເສັຽຫາຍອີກດ້ວຍ.

**ມາດຕາ 42** : ສັນຍາແລກປ່ຽນ.

ສັນຍາແລກປ່ຽນແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍຫນຶ່ງໄດ້ເອົາຊັບສິ່ງຂອງມອບໃຫ້ອີກຝ່າຍຫນຶ່ງ ແລະຝ່າຍນີ້ກໍໄດ້ເອົາຊັບສິ່ງຂອງອັນອື່ນຕອບແທນໃຫ້.

ສັນຍາແລກປ່ຽນ ຈະໄດ້ປະຕິບັດຕາມລະບຽບການຂອງສັນຍາຊື້ຂາຍ.

## ໝວດທີ II
## ສັນຍາຂາຍຝາກ

**ມາດຕາ 43 :** ສັນຍາຂາຍຝາກ.

ສັນຍາຂາຍຝາກ ແມ່ນການຕົກລົງຂອງຄູ່ສັນຍາ ເພື່ອຊື້ຂາຍຊັບສິ່ງຂອງ ຊຶ່ງຜູ້ຂາຍຍັງມີສິດ ຊື້ຊັບສິ່ງຂອງທີ່ຂາຍນັ້ນຄືນໄດ້ພາຍໃນກຳນົດ ສາມປີ ຕາມລາຄາທີ່ຕົນໄດ້ຂາຍໄປແລ້ວນັ້ນ.

ເມື່ອໝົດກຳນົດເວລາ ສາມ ປີແລ້ວ ຜູ້ຂາຍມີສິດຕໍ່ກຳນົດເວລາຂາຍຝາກອອກໄປອີກ ຖ້າຫາກ ວ່າໄດ້ມີການຕົກລົງກັນກ່ອນໃນເວລາເຮັດສັນຍາ ແຕ່ບໍ່ໃຫ້ເກີດໜຶ່ງປີ.

ເມື່ອຮອດກຳນົດເວລາແລ້ວ. ຖ້າວ່າຜູ້ຂາຍຫາກບໍ່ຊື້ເອົາຊັບສິ່ງຂອງນັ້ນຄືນ ຜູ້ຊື້ກໍຈະເປັນກຳມະສິດກ່ຽວກັບຊັບສິ່ງຂອງນັ້ນໂດຍເດັດຂາດ.

**ມາດຕາ 44 :** ຜົນຂອງສັນຍາຂາຍຝາກ.

ຖ້າວ່າຊັບສິ່ງຂອງທີ່ຂາຍຝາກນັ້ນ ຫາກເກີດມີຜົນຢ່າງໃດຢ່າງໜຶ່ງຂຶ້ນ ຜູ້ຊື້ທີ່ໄດ້ຈ່າຍເງິນຄ່າຊັບ ສິ່ງຂອງໝົດແລ້ວ ກໍຈະເປັນເຈົ້າກຳມະສິດກ່ຽວກັບຜົນທີ່ໄດ້ເກີດມານັ້ນ. ໃນກໍລະນີທີ່ຜູ້ຊື້ຫາກຍັງບໍ່ທັນໄດ້ຈ່າຍເງິນຄ່າຊັບສິ່ງຂອງນັ້ນໝົດ ຜູ້ຊື້ຈະໄດ້ຮັບຜົນທີ່ເກີດມານັ້ນ ກໍຕໍ່ເມື່ອຜູ້ກ່ຽວຫາກໄດ້ຈ່າຍດອກ ເບັ້ຽໃຫ້ແກ່ຜູ້ຂາຍຕາມຈຳນວນເງິນທີ່ຍັງຄ້າງຄານັ້ນ.

**ມາດຕາ 45 :** ການປົກປັກຮັກສາຊັບສິ່ງຂອງທີ່ຂາຍຝາກ.

ຜູ້ຊື້ຕ້ອງປົກປັກຮັກສາຊັບສິ່ງຂອງທີ່ຂາຍຝາກ. ສ່ວນຜູ້ຂາຍຕ້ອງທົດແທນຄ່າໃຊ້ຈ່າຍຕ່າງໆ ໃນການປົກປັກຮັກສາຊັບສິ່ງຂອງນັ້ນ ຊຶ່ງຜູ້ຊື້ໄດ້ຈ່າຍໄປແລ້ວ. ໃນກໍລະນີ ທີ່ການໃຊ້ຈ່າຍດັ່ງກ່າວ ຫາກມີມູນຄ່າພຽງເລັກໜ້ອຍກໍຈະຕົກເປັນພາລະຂອງຜູ້ຊື້ເອງ. ຜູ້ຊື້ຈະນຳໃຊ້ຊັບສິ່ງຂອງທີ່ຂາຍຝາກນັ້ນກໍໄດ້.

ຖ້າວ່າຜູ້ຂາຍ ຫາກຊື້ເອົາຊັບສິ່ງຂອງຄືນ ພາຍໃນກຳນົດເວລາແລ້ວ ຜູ້ຊື້ກໍຕ້ອງສົ່ງຊັບສິ່ງຂອງນັ້ນ ຄືນໃນສະພາບເດີມ.

## ໝວດທີ III
## ສັນຍາກູ້ຢືມ ແລະການຢືມຊັບສິ່ງຂອງໄປໃຊ້

**ມາດຕາ 46** ( ໃໝ່ ) : ສັນຍາກູ້ຢືມ

ສັນຍາກູ້ຢືມແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ຢືມຕ້ອງມອບເງິນ ຫລື ຊັບສິ່ງຂອງໃຫ້ເປັນກຳມະສິດແກ່ຜູ້ແກ່ຢືມ ແລະຜູ້ກູ້ຢືມຕ້ອງສົ່ງຈຳນວນ ຫລື ຊັບສິ່ງຂອງ ປະເພດທີ່ກູ້ຢືມນັ້ນ ຕາມຈຳນວນເທົ່າທຽມກັນ ແລະຄຸນນະພາບດຽວກັນຄືນໃຫ້ແກ່ຜູ້ໃຫ້ຢືມຕາມກຳນົດເວລາທີ່ໄດ້ໄວ້ໃນສັນຍາ.

ຖ້າວ່າກຳນົດເວລາຫາກບໍ່ໄດ້ບົ່ງໄວ້ໃນສັນຍານັ້ນກໍໃຫ້ປະຕິບັດຕາມການສະເໜີຂອງຜູ້ໃຫ້ຢືມ ຊຶ່ງໄດ້ບົ່ງໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້.

ໃນສັນຍາກູ້ຢືມອາດຈະບົ່ງບອກເຖິງຈຸດປະສົງຂອງການນຳໃຊ້ເງິນ ຫລື ຊັບສິ່ງຂອງທີ່ກູ້ຢືມນັ້ນ ແລະຜູ້ກູ້ຢືມກໍຕ້ອງນຳໃຊ້ເງິນ ແລະຊັບສິ່ງຂອງດັ່ງກ່າວ ຕາມທີ່ໄດ້ບົ່ງໄວ້ໃນສັນຍາ.

ການກູ້ຢືມເງິນ ຫລື ຊັບສິ່ງຂອງຈະມີດອກເບ້ຍໄດ້ກໍຕໍ່ເມື່ອຫາກໄດ້ບົ່ງໄວ້ໃນສັນຍາເທົ່ານັ້ນ.

ດອກເບ້ຍຂອງການກູ້ຢືມເງິນຈາກທະນາຄານ ໃຫ້ປະຕິບັດຕາມລະບຽບການຂອງທະນາຄານ ທີ່ໃຫ້ກູ້ຢືມເງິນນັ້ນ.

ນອກຈາກການກູ້ຢືມເງິນ ຈາກທະນາແລ້ວ ການຄິດໄລ່ດອກເບ້ຍ ແມ່ນບໍ່ໃຫ້ສູງກວ່າດອກເບ້ຍທະນາຄານ ສາມສ່ວນຮ້ອຍຕໍ່ປີ.

ໃນການກູ້ຢືມນັ້ນ ບໍ່ໃຫ້ເອົາດອກເບ້ຍມາເປັນຕົ້ນທຶນ ແລະບໍ່ໃຫ້ດອກເບ້ຍນັ້ນກາຍຕົ້ນທຶນ.

ໃນເມື່ອຮອດກຳນົດເວລາໃຊ້ແທນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາແລ້ວ ຖ້າວ່າຜູ້ໃຫ້ຢືມຫາກບໍ່ຍອມຮັບເອົາເງິນ ຫລື ຊັບສິ່ງຂອງຈາກຜູ້ກູ້ຢືມໃນກໍລະນີນັ້ນ ກໍຈະບໍ່ມີການຄິດໄລ່ດອກເບ້ຍໃຫ້ຕໍ່ໄປ.

ສຳລັບ ການກູ້ຢືມເງິນກັບຕ່າງປະເທດນັ້ນ ການຄິດໄລ່ດອກເບ້ຍ ໃຫ້ອີງຕາມການຕົກລົງຂອງຄູ່ສັນຍາ.

**ມາດຕາ 47** : ຄວາມຮັບຜິດຊອບຂອງຄູ່ຜົວເມັຍຕໍ່ໜີ້ສິນ.

ຄູ່ຜົວເມັຍຫລືຝ່າຍໃດຝ່າຍໜຶ່ງຕ້ອງຮັບຜິດຊອບຕໍ່ການກູ້ຢືມເງິນຫລືຊັບສິ່ງຂອງໃນກໍລະນີດັ່ງນີ້:

ຜົວ ແລະ ເມັຍ ໄດ້ພ້ອມກັນກູ້ຢືມເງິນ ຫລື ຊັບສິ່ງຂອງນັ້ນ;

ຜົວ ຫລື ເມັຍໄດ້ກູ້ຢືມເງິນ ຫລື ຊັບສິ່ງຂອງແຕ່ຝ່າຍດຽວເພື່ອມາໃຊ້ຈ່າຍໃນຄອບຄົວ.

ຜົວ ຫລື ເມັຍ ໄດ້ກູ້ຢືມເງິນ ຫລື ຊັບສິ່ງຂອງແຕ່ຝ່າຍດຽວ ເພື່ອຜົນປະໂຫຍດສ່ວນຕົວຂອງຜູ້ກ່ຽວເອງ. ໃນກໍລະນີ ຜົວ ຫລື ເມັຍ ທີ່ໄດ້ແທນໜີ້ສິນນັ້ນ ກໍມີສິດໄດ້ຮັບການທົດແທນຄືນໃນເວລາແບ່ງປັນສິນສົມສ້າງ.

**ມາດຕາ 48** : ສັນຍາຢືມຊັບສິ່ງຂອງໄປໃຊ້.

ສັນຍາຢືມຊັບສິ່ງຂອງໃຊ້ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ຢືມໄດ້ມອບຊັບສິ່ງຂອງໃຫ້ແກ່ຜູ້ຢືມໄປໃຊ້ໂດຍບໍ່ຄິດຄ່າ ແລະຜູ້ຢືມຕ້ອງສົ່ງຊັບສິ່ງຂອງດັ່ງກ່າວຄືນໃຫ້ແກ່ເຈົ້າຂອງຊັບໃນສະພາບເດີມ ຕາມກຳນົດເວລາທີ່ໄດ້ຕົກລົງກັນ.

ໃນກໍລະນີ ທີ່ຊັບສິ່ງຂອງທີ່ໄດ້ຢືມໄປໃຊ້ນັ້ນ ຫາກຖືກເສັຽຫາຍ, ເປ່ເພ ໃນເວລາທີ່ຢືມໄປແລ້ວ ຜູ້ຢືມຕ້ອງຮັບຜິດຊອບເວັ້ນເສັຽແຕ່ໄດ້ມີການຕົກລົງກັນຢ່າງອື່ນໄວ້ໃນສັນຍາ.

ຖ້າວ່າບໍ່ມີຄວາມສາມາດສົ່ງຊັບສິ່ງຂອງທີ່ຢືມໄປໃຊ້ນັ້ນຄືນໃຫ້ແກ່ເຈົ້າຊັບນ້ອຍໄດ້ຜູ້ຢືມອາດຈະໃຊ້ ແທນດ້ວຍເງິນ ຫລື ຊັບສິ່ງຂອງອື່ນກໍໄດ້ຕາມຄວາມເຫັນດີຂອງຜູ້ໃຫ້ຢືມ ແລະຕາມລາຄາໃນທ້ອງ ຕະຫລາດໃນເວລານັ້ນ.

## ໝວດທີ IV
## ສັນຍາເຊົ່າຊັບສິ່ງຂອງ

**ມາດຕາ 49** : ສັນຍາເຊົ່າຊັບສິ່ງຂອງ.

ສັນຍາເຊົ່າຊັບສິ່ງຂອງແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ເຊົ່າໄດ້ມອບຊັບສິ່ງຂອງທີ່ເປັນ ກຳມະສິດຂອງຕົນໃຫ້ຜູ້ເຊົ່ານຳໃຊ້ຊົ່ວຄາວ ແລະຜູ້ເຊົ່າຕ້ອງຈ່າຍຄ່າເຊົ່າຕາມລາຄາ ແລະກຳນົດເວລາທີ່ ໄດ້ ຕົກລົງກັນ.

ສັນຍາເຊົ່າຊັບສິ່ງຂອງອາດຈະເຮັດຂຶ້ນໂດຍບໍ່ມີການກຳນົດເວລາ. ໃນກໍລະນີນີ້ ຜູ້ໃຫ້ເຊົ່າ ຫລື ຜູ້ ເຊົ່າກໍມີສິດຍົກເລີກສັນຍາໄດ້ທຸກເວລາ ແຕ່ຕ້ອງແຈ້ງໃຫ້ຄູ່ສັນຍາຊາບລ່ວງໜ້າກ່ອນສາມເດືອນ ສຳລັບ ຊັບຄົງທີ່ເຊັ່ນ : ເຮືອນ, ອາຄານ ແລະໜຶ່ງເດືອນສຳລັບການເຊົ່າຊັບເຄື່ອນທີ່ ເຊັ່ນ : ລົດ, ເຮືອ, ສັດ.

ກ່ອນຈະມອບຊັບສິ່ງຂອງໃຫ້ເຊົ່ານັ້ນ ຜູ້ໃຫ້ເຊົ່າຕ້ອງແຈ້ງຂໍ້ບົກຜ່ອງ ຫລື ຈຸດພິເສດຂອງຊັບສິ່ງ ຂອງ ນັ້ນ ໃຫ້ຜູ້ເຊົ່າຊາບ.

ໃນກໍລະນີທີ່ຜູ້ໃຫ້ເຊົ່າຫາກບໍ່ໄດ້ແຈ້ງຂໍ້ບົກຜ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງນັ້ນແລ້ວ ຖ້າຫາກມີ ການເສັຽຫາຍ ຫລື ເປ່ເພຍ້ອນສາເຫດດັ່ງກ່າວນັ້ນ ຜູ້ເຊົ່າກໍຈະບໍ່ມີຄວາມຮັບຜິດຊອບແຕ່ຢ່າງໃດ.

**ມາດຕາ 50** : ການຈ່າຍຄ່າເຊົ່າຊັບສິ່ງຂອງ.

ໃນການເຊົ່າຊັບສິ່ງຂອງນັ້ນ ຜູ້ເຊົ່າອາດຈະຈ່າຍເງິນຄ່າເຊົ່າເປັນມື້, ເປັນອາທິດ, ເປັນເດືອນ, ເປັນປີ ຫລື ຈ່າຍລ່ວງໜ້າກ່ອນກໍໄດ້. ໃນກໍລະນີ ທີ່ຜູ້ເຊົ່າໄດ້ຈ່າຍລ່ວງໜ້າໄປແລ້ວ ຫາກມີການຍົກເລີກ ສັນຍາ ກ່ອນກຳນົດເວລາຜູ້ໃຫ້ເຊົ່າຕ້ອງສົ່ງເງິນຄ່າເຊົ່າສ່ວນທີ່ເຫລືອຊຶ່ງໄດ້ຈ່າຍລ່ວງໜ້ານັ້ນຄືນ ແລະຜູ້ກ່ຽວກໍມີ ສິດທວງເອົາຄ່າເສັຽຫາຍຈາກຜູ້ເຊົ່າ ທີ່ໄດ້ລະເມີດສັນຍານັ້ນໄດ້.

ໃນກໍລະນີທີ່ຜູ້ໃຫ້ເຊົ່າຫາກລະເມີດສັນຍາຜູ້ເຊົ່າມີສິດທວງເອົາເງິນຄ່າເຊົ່າ ສ່ວນທີ່ເຫລືອ ຊຶ່ງໄດ້ ຈ່າຍລ່ວງຫ້ນາໄປແລ້ວນັ້ນ ພ້ອມທັງຄ່າເສັຽຫາຍຈາກຜູ້ໃຫ້ເຊົ່າອີກດ້ວຍ.

**ມາດຕາ 51** : ການນຳໃຊ້ ແລະການສ້ອມແປງຊັບສິ່ງຂອງທີ່ເຊົ່າ.

ຜູ້ເຊົ່າຕ້ອງນຳໃຊ້ຊັບສິ່ງຂອງທີ່ເຊົ່ານັ້ນໃຫ້ສອດຄ່ອງກັບສັນຍາ ແລະຄຸນປະໂຫຍດຂອງຊັບສິ່ງ ຂອງທີ່ເຊົ່າ, ຄຸ້ມຄອງ, ຮັກສາໃຫ້ຢູ່ໃນສະພາບອັນເໝາະສົມ ແລະສົ່ງຊັບສິ່ງຂອງນັ້ນຄືນໃຫ້ແກ່ຜູ້ໃຫ້ເຊົ່າ ໃນສະພາບເດີມ ພາຍຫລັງທີ່ສັນຍານັ້ນໄດ້ສິ້ນສຸດລົງ. ຜູ້ເຊົ່າຕ້ອງຮັບຜິດຊອບຕໍ່ການເສັຽຫາຍ ຫລື ເປ່ເພທີ່ ເນື່ອງມາຈາກຄວາມຜິດຂອງຜູ້ກ່ຽວ.

ໃນການນຳໃຊ້ຊັບສິ່ງຂອງທີ່ເຊົ່ານັ້ນ ອາດຈະມີການສ້ອມແປງ ຊຶ່ງຕົກເປັນພາລະຂອງຜູ້ເຊົ່າ ຫລື ຜູ້ໃຫ້ເຊົ່າ.

ຖ້າຫາກແມ່ນການສ້ອມແປງນ້ອຍ ເຊັ່ນ: ແປງກະແຈ, ຢາເຮືອນຮົ່ວ, ຈອດຕົນລົດ ກໍຈະຕົກເປັນພາລະຂອງຜູ້ເຊົ່າ.

ສ່ວນການສ້ອມແປງໃຫຍ່ເຊັ່ນ : ການຮື້ຫລັງຄາເຮືອນ, ຍົກຈັກລົດ ນັ້ນກໍຈະຕົກເປັນພາລະຂອງຜູ້ໃຫ້ເຊົ່າ.

**ມາດຕາ 52** : ການປ່ຽນເຈົ້າກຳມະສິດໃນຊັບສິ່ງຂອງທີ່ເຊົ່າ.

ໃນກໍລະນີທີ່ຜູ້ໃຫ້ເຊົ່າຫາກໄດ້ມອບ ຫລື ຂາຍຊັບສິ່ງຂອງທີ່ເຊົ່ານັ້ນໃຫ້ແກ່ບຸກຄົນອື່ນ ສັນຍາເຊົ່າຊັບສິ່ງຂອງນັ້ນກໍຍັງມີຜົນໃຊ້ໄດ້ສຳລັບເຈົ້າກຳມະສິດຜູ້ໃຫມ່ ແຕ່ຜູ້ໃຫ້ເຊົ່າຕ້ອງແຈ້ງໃຫ້ແກ່ເຈົ້າກຳມະສິດ ຜູ້ໃຫມ່ຊາບກ່ອນ ວ່າຊັບສິ່ງຂອງດັ່ງກ່າວ ຍັງຢູ່ໃນການນຳໃຊ້ຂອງບຸກຄົນອື່ນ.

## ຫມວດທີ V
## ສັນຍາຝາກຊັບສິ່ງຂອງ

**ມາດຕາ 53** : ສັນຍາຝາກຊັບສິ່ງຂອງ.

ສັນຍາຝາກຊັບສິ່ງຂອງແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຝາກໄດ້ມອບຊັບສິ່ງຂອງໃຫ້ແກ່ ຜູ້ຮັບຝາກ ເພື່ອປົກປັກຮັກສາ ແລະຜູ້ຮັບຝາກຕ້ອງສົ່ງຊັບສິ່ງຂອງດັ່ງກ່າວຄືນໃນສະພາບເດີມໃຫ້ແກ່ຜູ້ຝາກ ເມື່ອຜູ້ກ່ຽວຫາກທວງຖາມເອົາ.

ໃນການຝາກຊັບສິ່ງຂອງນັ້ນ ອາດຈະມີການຈ່າຍ ຫລື ບໍ່ມີການຈ່າຍຄ່າຝາກກໍໄດ້ ແລ້ວແຕ່ຄູ່ສັນຍາຈະຕົກລົງກັນ ຫລື ຕາມລະບຽບການສະເພາະ.

ໃນກໍລະນີ ທີ່ການຝາກຊັບສິ່ງຂອງຫາກມີກຳນົດເວລາຜູ້ຮັບຝາກບໍ່ມີສິດຈະສົ່ງຊັບທີ່ຝາກນັ້ນຄືນກ່ອນກຳນົດເວລາໄດ້ເວັ້ນເສັຽແຕ່ໃນກໍລະນີຈຳເປັນ ແຕ່ຜູ້ຝາກຈະນຳເອົາຊັບສິ່ງຂອງທີ່ຝາກນັ້ນຄືນກ່ອນກຳນົດເວລາກໍໄດ້. ການຈ່າຍຄ່າຝາກຊັບສິ່ງຂອງນັ້ນຈະຄິດໄລ່ຕາມກຳນົດເວລາຝາກຕົວຈິງ ເວັ້ນເສັຽແຕ່ຫາກໄດ້ຕົກລົງກັນຢ່າງອື່ນໄວ້ໃນສັນຍາ.

ຖ້າວ່າການຝາກຊັບສິ່ງຂອງ ຫາກບໍ່ມີກຳນົດເວລາ ຜູ້ຝາກຈະເອົາຊັບສິ່ງຂອງທີ່ຝາກນັ້ນຄືນໃນເວລາໃດກໍໄດ້ແລະຜູ້ຮັບຝາກກໍມີສິດທວງໃຫ້ຜູ້ຝາກຮັບເອົາຊັບສິ່ງຂອງ ຂອງຕົນຄືນໃນເວລາອັນເຫມາະສົມ.

**ມາດຕາ 54** : ພັນທະຂອງຜູ້ຮັບຝາກ.

ຜູ້ຮັບຝາກມີພັນທະປົກປັກຮັກສາບໍ່ໃຫ້ຊັບສິ່ງຂອງທີ່ຝາກນັ້ນຖືກເສັຽຫາຍ, ເປ່ເພ ຫລື ເສັຽຄຸນນະພາບ, ສົ່ງຊັບສິ່ງຂອງທີ່ຝາກນັ້ນຄືນໃຫ້ແກ່ຜູ້ຝາກໃນສະພາບເດີມ.

ຜູ້ຮັບຝາກບໍ່ມີສິດນຳໃຊ້ຊັບສິ່ງຂອງທີ່ຝາກນັ້ນ ຫລື ມອບຊັບສິ່ງຂອງດັ່ງກ່າວ ໃຫ້ຜູ້ອື່ນປົກປັກຮັກສາແທນ ເວັ້ນເສັຽແຕ່ໄດ້ຮັບອະນຸຍາດຈາກເຈົ້າຂອງຊັບສິ່ງຂອງເທົ່ານັ້ນ. ຖ້າວ່າຊັບສິ່ງຂອງທີ່ຝາກຫາກເກີດຫມາກຜົນສິ່ງໃດສິ່ງຫນຶ່ງຂຶ້ນ ຫມາກຜົນທີ່ເກີດນັ້ນກໍຈະຕົກເປັນຂອງຜູ້ຝາກ.

ໃນເມື່ອຊັບສິ່ງຂອງທີ່ຝາກຫາກມີການເສັຽຫາຍ, ເປ່ເພ ຫລື ເສັຽຄູນນະພາບແລ້ວ ຜູ້ຮັບຝາກ ຕ້ອງແຈ້ງໃຫ້ຜູ້ຝາກນັ້ນຊາບໃນທັນໃດ.

ຜູ້ຮັບຝາກຕ້ອງຮັບຜິດຊອບຕໍ່ການເສັຽຫາຍດັ່ງກ່າວ ເວັ້ນເສັຽແຕ່ການເສັຽຫາຍນັ້ນ ຫາກເກີດຂຶ້ນຍ້ອນເຫດບັງເອີນ ຫລືເຫດສຸດວິໄສເທົ່ານັ້ນ.

**ມາດຕາ 55** : ພັນທະຂອງຜູ້ຝາກ.

ຜູ້ຝາກມີພັນທະແຈ້ງຂໍ້ບົກຜ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງທີ່ຝາກນັ້ນໃຫ້ຜູ້ຮັບຊາບແລ້ວຄູ່ສັນຍາທັງສອງຝ່າຍ ຈຶ່ງພ້ອມກັນກວດກາເບິ່ງສະພາບຕົວຈິງຂອງຊັບສິ່ງຂອງນັ້ນ.

ຖ້າວ່າຜູ້ຝາກຫາກບໍ່ໄດ້ແຈ້ງຈຸດພິເສດຂອງຊັບສິ່ງຂອງນັ້ນ ໃຫ້ຜູ້ຮັບຝາກຊາບ ຊຶ່ງພາໃຫ້ມີການເສັຽຫາຍແກ່ຜູ້ຮັບຝາກ ຫລື ຊັບສິ່ງຂອງທີ່ຝາກນັ້ນແລ້ວ ຜູ້ຝາກຕ້ອງຮັບຜິດຊອບຕໍ່ການເສັຽຫາຍທີ່ເກີດຂຶ້ນ.

ຜູ້ຝາກຕ້ອງຮັບເອົາຊັບສິ່ງຂອງຕາມກຳນົດເວລາ ແລະຈ່າຍຄ່າຝາກ ຖ້າຫາກວ່າມີການຕົກລົງກັນ.

ຖ້າວ່າຄູ່ສັນຍາຫາກໄດ້ຕົກລົງຈ່າຍຄ່າຝາກ ນັບແຕ່ມື້ທີ່ໄດ້ເຊັນສັນຍາເປັນຕົ້ນໄປ ການຊັກຊ້າໃນການມອບຊັບສິ່ງຂອງເພື່ອຝາກນັ້ນກໍຈະຕົກເປັນຄວາມຮັບຜິດຊອບຂອງຜູ້ຝາກເອງ. ນອກຈາກນີ້ ຜູ້ຝາກຍັງຈະຕ້ອງຮັບຜິດຊອບຕໍ່ການຊັກຊ້າ ໃນການຮັບເອົາຊັບສິ່ງຂອງນັ້ນຄືນ.

ໃນເມື່ອຜູ້ຮັບຝາກຫາກໄດ້ໃຊ້ຈ່າຍໃນການປັກປັກຮັກສາຊັບສິ່ງຂອງນັ້ນແລ້ວ ຜູ້ຝາກກໍຕ້ອງທົດແທນຄ່າໃຊ້ຈ່າຍນັ້ນ.

ໃນກໍລະນີທີ່ຊັບສິ່ງຂອງທີ່ຝາກນັ້ນຫາກມີລັກສະນະປ່ຽນຮູບ, ເສັຽຄຸນນະພາບໄວ ແລະຜູ້ຝາກບໍ່ມາຮັບເອົາຕາມກຳນົດເວລາແລ້ວ ຜູ້ຮັບຝາກມີສິດ ຂາຍຊັບສິ່ງຂອງດັ່ງກ່າວ ແລະຫັກເອົາຄ່າຝາກ ສ່ວນເງິນທີ່ຍັງເຫລືອນັ້ນຕ້ອງໃຫ້ສົ່ງຄືນໃຫ້ຜູ້ຝາກ.

## ຫມວດທີ VI
## ສັນຍາມອບຫມາຍ

**ມາດຕາ 56** : ສັນຍາມອບຫມາຍ.

ສັນຍາມອບຫມາຍ ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຮັບມອບຫມາຍຕ້ອງເຮັດສິ່ງໃດສິ່ງຫນຶ່ງໃນນາມ ແລະດ້ວຍທຶນຂອງຜູ້ມອບຫມາຍ. ຜູ້ມອບຫມາຍມີພັນທະຈ່າຍຄ່າຕອບແທນໃຫ້ຜູ້ຮັບມອບຫມາຍຖ້າຫາກວ່າໄດ້ບົ່ງໄວ້ໃນສັນຍາ ຫລື ກົດຫມາຍ.

ຜູ້ຮັບມອບຫມາຍຈະເຮັດສິ່ງໃດສິ່ງຫນຶ່ງຕາມການມອບຫມາຍໄດ້ກໍຕໍ່ເມື່ອຫາກມີໃບມອບສັນ ທະເທົ່ານັ້ນ ເວັ້ນເສັຽແຕ່ໄດ້ເຮັດສິ່ງໃດສິ່ງຫນຶ່ງທີ່ມີຄວາມສຳຄັນເລັກນ້ອຍເທົ່ານັ້ນ.

ການມອບຫມາຍໃຫ້ຜູ້ມອບຫມາຍນັ້ນ ໃຫ້ເຮັດເປັນລາຍລັກອັກສອນ ແລະບໍ່ໃຫ້ເກີນ ສາມປີ. ຖ້າວ່າກຳນົດເວລາຂອງການມອບຫມາຍຫາກບໍ່ໄດ້ບົ່ງໄວ້ໃນສັນຍາມອບຫມາຍແລ້ວ ການມອບຫມາຍ ກໍຈະມີຜົນບັງຄັບໃຊ້ໄດ້ພາຍໃນກຳນົດຫນຶ່ງປີນັບແຕ່ມື້ທີ່ໄດ້ເຮັດໃບມອບສັນທະນັ້ນເປັນຕົ້ນໄປ.

ພໍ່ແມ່ ຫລື ຜູ້ປົກຄອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ, ຜົວ ຫລື ເມັຽຈະເຮັດສິ່ງໃດສິ່ງຫນຶ່ງແທນກັນໂດຍບໍ່ມີໃບມອບສັນທະກໍໄດ້.

**ມາດຕາ 57** : ພັນທະຂອງຜູ້ຮັບມອບຫມາຍ.

ຜູ້ຮັບມອບຫມາຍມີພັນທະປະຕິບັດການມອບຫມາຍນັ້ນ ດ້ວຍຕົນເອງຢ່າງສອດຄ່ອງກັບຄຳແນະນຳຂອງຜູ້ມອບຫມາຍ ແລະປະຕິບັດດ້ວຍຄວາມຈິງໃຈເຫມືອນດັ່ງວຽກງານຂອງຕົນເອງ. ຖ້າວ່າ ຜູ້ຮັບມອບຫມາຍຫາກບໍ່ສາມາດປະຕິບັດດ້ວຍຕົນເອງໄດ້ຍ້ອນສາເຫດພາວະວິໄສແລ້ວ ຜູ້ກ່ຽວກໍມີສິດມອບການມອບຫມາຍໃຫ້ບຸກຄົນອື່ນປະຕິບັດແທນຕົນກໍໄດ້ ແຕ່ຕ້ອງໄດ້ແຈ້ງກ່ຽວກັບບຸກຄະລິກກະ ພາບ, ຄວາມສາມາດຂອງບຸກຄົນທີ່ຈະປະຕິບັດແທນນັ້ນ ໃຫ້ຜູ້ມອບຫມາຍຊາບໃນທັນໃດ ເພື່ອຂໍຄວາມ ເຫັນດີຈາກຜູ້ກ່ຽວ ຖ້າບໍ່ດັ່ງນັ້ນ ຜູ້ຮັບມອບຫມາຍກໍຈະຮັບຜິດຊອບຕໍ່ການເສັຽຫາຍທີ່ເກີດຂຶ້ນແກ່ຜູ້ມອບ ຫມາຍ ຍ້ອນການກະທຳຂອງບຸກຄົນນັ້ນ. ຜູ້ຮັບມອບຫມາຍຍັງມີພັນທະລາຍງານ ແລະມອບສິ່ງຂອງ, ເງິນ ຫລື ເອກະສານທີ່ຮັບຈາກການປະຕິບັດການມອບຫມາຍນັ້ນ ໃຫ້ຜູ້ມອບຫມາຍໂດຍທັນທີ.

ໃນກໍລະນີ ທີ່ຜູ້ຮັບມອບຫມາຍຫາກໄດ້ກໍ່ຄວາມເສັຽຫາຍໃຫ້ແກ່ຜູ້ມອບຫມາຍ ໃນການປະຕິບັດວຽກງານທີ່ຕົນໄດ້ມອບຫມາຍນັ້ນຜູ້ກ່ຽວຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍໃຫ້ແກ່ຜູ້ມອບຫມາຍ.

**ມາດຕາ 58** : ພັນທະຂອງຜູ້ມອບຫມາຍ.

ຜູ້ມອບຫມາຍຕ້ອງຮັບປະກັນວັດຖຸສິ່ງຂອງທີ່ຈຳເປັນໃຫ້ແກ່ຜູ້ຮັບມອບຫມາຍ ເພື່ອປະຕິບັດວຽກງານຂອງຕົນ, ຕ້ອງຮັບຮູ້ວຽກງານທີ່ຜູ້ຮັບມອບຫມາຍ ໄດ້ປະຕິບັດມາແລ້ວໃນຂອບເຂດການມອບຫມາຍຂອງຕົນ, ຕ້ອງຈ່າຍຄ່າຕອບແທນໃຫ້ຜູ້ຮັບມອບຫມາຍ ໃນກໍລະນີທີ່ໄດ້ບົ່ງໄວ້ໃນສັນຍາ ແລະຮັບຮູ້ການໃຊ້ຈ່າຍຂອງຜູ້ຮັບມອບຫມາຍໃນການປະຕິບັດວຽກງານ.ຜູ້ມອບຫມາຍມີສິດບໍ່ຮັບເອົາວຽກງານທີ່ຜູ້ຮັບມອບຫມາຍໄດ້ປະຕິບັດໂດຍບໍ່ສອດຄ່ອງກັບຄຳແນະນຳ ຫລື ເກີນຂອບເຂດຂອງການມອບ ຫມາຍ.

ຖ້າວ່າຜູ້ມອບຫມາຍຫາກບໍ່ຮັບຮູ້ວຽກງານທີ່ຜູ້ຮັບມອບຫມາຍໄດ້ປະຕິບັດໂດຍສອດຄ່ອງກັບ ການມອບຫມາຍ ລວມທັງການໃຊ້ຈ່າຍໃນການປະຕິບັດວຽກງານນັ້ນ ຜູ້ມອບຫມາຍຕ້ອງຮັບຜິດຊອບໃຊ້ ແທນຄ່າເສັຽຫາຍທັງຫມົດ.

## ຫມວດທີ VII
## ສັນຍາບໍລິການ

**ມາດຕາ 59 :** ສັນຍາບໍລິການ

ສັນຍາບໍລິການ ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ບໍລິການຕ້ອງຮັບໃຊ້, ເຮັດ ຫລື ສ້າງສິ່ງໃດ ສິ່ງໜຶ່ງ ຕາມຄວາມຕ້ອງການຂອງຜູ້ໃຊ້ບໍລິການ ແລະຜູ້ໃຊ້ບໍລິການຕ້ອງຈ່າຍຄ່າບໍລິການນັ້ນ ຕາມລາຄາທີ່ໄດ້ຕົກລົງກັນ.

ຜູ້ບໍລິການ ມີພັນທະມອບສິ່ງຂອງທີ່ຕົນໄດ້ເຮັດ ຫລື ສ້າງສຳເລັດແລ້ວນັ້ນ ຜູ້ໃຊ້ບໍລິການຕາມກຳນົດເວລາ ແລະຮັບປະກັນຄຸນນະພາບ.

ໃນກໍລະນີ ທີ່ຜູ້ບໍລິການ ຫາກໄດ້ເຮັດ ຫລື ສ້າງໂດຍບໍ່ມີຄຸນນະພາບແລ້ວ ຜູ້ໃຊ້ບໍລິການ ຈະບໍ່ຮັບເອົາການບໍລິການນັ້ນກໍໄດ້. ຜູ້ບໍລິການກໍບໍ່ມີສິດທວງເອົາຄ່າບໍລິການ ແລະຈະຕ້ອງໄດ້ໃຊ້ແທນຄ່າວັດຖຸປະກອບ ຖ້າວ່າວັດຖຸປະກອບນັ້ນ ຫາກແມ່ນຜູ້ໃຊ້ບໍລິການເປັນຜູ້ຈັດຫາໃຫ້.

ຜູ້ໃຊ້ບໍລິການມີພັນທະຮັບເອົາສິ່ງຂອງທີ່ຜູ້ບໍລິການໄດ້ເຮັດ ຫລືສ້າງສຳເລັດແລ້ວ ພ້ອມທັງຈ່າຍຄ່າບໍລິການນັ້ນ.

ຖ້າວ່າຜູ້ໃຊ້ບໍລິການ ຫາກເປັນຜູ້ຈັດຫາວັດຖຸປະກອນທີ່ບໍ່ມີຄຸນນະພາບມາໃຫ້ ແລະຜູ້ບໍລິການກໍໄດ້ແຈ້ງຂໍ້ບົກຜ່ອງຂອງວັດຖຸປະກອນນັ້ນ ໃຫ້ແກ່ຜູ້ກ່ຽວຊາບແລ້ວ ຜູ້ໃຊ້ບໍລິການກໍຈະໄດ້ຮັບຜິດຊອບເອົາເອງ ແລະຍັງຈະໄດ້ຈ່າຍຄ່າບໍລິການອີກດ້ວຍ. ໃນກໍລະນີທີ່ຜູ້ໃຊ້ບໍລິການຫາກຕ້ອງການປ່ຽນຜູ້ບໍລິການ ຄົນໃຫມ່ ຜູ້ໃຊ້ບໍລິການຕ້ອງໄດ້ຈ່າຍຄ່າບໍລິການຄົນເກົ່າ ທີ່ໄດ້ເຮັດ ຫລື ສ້າງສິ່ງຂອງນັ້ນ ໄປສ່ວນໃດສ່ວນໜຶ່ງແລ້ວ.

## ໝວດທີ VIII
## ສັນຍາຮັບເຫມົາກໍ່ສ້າງ

**ມາດຕາ 60 :** ສັນຍາຮັບເຫມົາກໍ່ສ້າງ.

ສັນຍາຮັບເຫມົາກໍ່ສ້າງ ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຮັບເຫມົາຕ້ອງກໍ່ສ້າງສິ່ງໃດສິ່ງໜຶ່ງ ອັນແນ່ນອນ ຕາມໂຄງການຂອງເຈົ້າໂຄງການດ້ວຍວັດຖຸປະກອນຂອງເຈົ້າຂອງໂຄງການ ຫລື ຂອງຕົນເອງ. ສ່ວນເຈົ້າຂອງໂຄງການນັ້ນຕ້ອງຮັບເອົາ ແລະຈ່າຍຄ່າສິ່ງທີ່ກໍ່ສ້າງຊຶ່ງໄດ້ເຮັດແລ້ວນັ້ນ.

ຜູ້ຮັບເຫມົາມີສິດສະເຫນີໃຫ້ເຈົ້າຂອງໂຄງການຮູ້ວ່າຕົນບໍ່ສາມາດປະຕິບັດຄຳແນະນຳ ຫລື ໃຊ້ວັດຖຸປະກອນ ຫລື ພາຫະນະຂອງເຈົ້າຂອງໂຄງງການທີ່ບໍ່ຖືກຕ້ອງຕາມມາດຕະຖານ.

ຖ້າວ່າເຈົ້າຂອງໂຄງການຫາກບໍ່ໄດ້ແກ້ໄຂພາຍໃນກຳນົດອັນເຫມາະສົມແລ້ວ ຜູ້ຮັບເຫມົາມີສິດຂໍຍົກເລີກສັນຍາ ແລະທວງເອົາຄ່າເສັຽຫາຍ.

ໃນກໍລະນີທີ່ວັດຖຸປະກອນ ຫລື ພາຫະນະຫາກເປັນຂອງເຈົ້າຂອງໂຄງການແລ້ວ ຜູ້ຮັບເຫມົາຕ້ອງນຳໃຊ້ໃຫ້ຖືກຕ້ອງ. ຖ້າວ່າການນຳໃຊ້ຫາກບໍ່ຖືກຕ້ອງແລ້ວ ຜູ້ກ່ຽວຕ້ອງຮັບຜິດຊອບ ນອກຈາກນີ້ ກໍຍັງມີພັນທະມອບບັນຊີກ່ຽວກັບການນຳໃຊ້ວັດຖຸປະກອນ ແລະສິ່ງວັດຖຸປະກອນທີ່ຍັງເຫລືອຄືນໃຫ້ແກ່ ເຈົ້າຂອງໂຄງການ.

ເຈົ້າຂອງໂຄງການມີສິດກວດກາເບິ່ງສິ່ງທີ່ໄດ້ກໍ່ສ້າງ. ຖ້າວ່າສິ່ງທີ່ໄດ້ກໍ່ສ້າງນັ້ນ ຫາກບໍ່ໄດ້ປະຕິ ບັດ ຫລື ປະຕິບັດບໍ່ຖືກຕ້ອງຕາມເງື່ອນໄຂຂອງສັນຍາ ອັນພາໃຫ້ສິ່ງທີ່ກໍ່ສ້າງນັ້ນບໍ່ໄດ້ມາດຕະຖານ ຫລື ເປ່ເພ

ແລ້ວ ເຈົ້າຂອງໂຄງການມີສິດຮ້ອງຂໍໃຫ້ແກ້ໄຂ ຫລື ປັບແປງພາຍໃນກຳນົດເວລາອັນຄວນ ຫລື ທວງເອົາຄ່າເສັຽຫາຍຖ້າວ່າການໃຊ້ຈ່າຍໃນການປັບແປງນັ້ນ ຫາກເປັນວັດຖຸປະກອບ ຫລື ພາຫະນະຂອງຕົນເອງ. ໃນກໍລະນີພິເສດນັ້ນເຈົ້າຂອງໂຄງການອາດຈະຂໍລົບລ້າງສັນຍາ ແລະທວງເອົາຄ່າເສັຽ ຫາຍກໍໄດ້.

ວັດຖຸປະກອບ ຫລື ພາຫະນະ ທີ່ເຈົ້າຂອງໂຄງການເປັນຜູ້ຈັດຫາໃຫ້ນັ້ນຕ້ອງໃຫ້ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານ ແລະໃຫ້ທັນກຳນົດເວລາ.

**ມາດຕາ 61** : ການຮັບປະກັນຄຸນນະພາບຂອງສິ່ງທີ່ກໍ່ສ້າງ.

ຜູ້ຮັບເຫມົາຕ້ອງຮັບປະກັນສິ່ງທີ່ກໍ່ສ້າງຕາມລະບຽບຂອງການກໍ່ສ້າງ.

ພາຍຫລັງທີ່ເຈົ້າຂອງໂຄງການໄດ້ຮັບເອົາສິ່ງທີ່ກໍ່ສ້າງແລ້ວ ຫາກຍັງເຫັນວ່າມີສິ່ງບົກຜ່ອງໃນການກໍ່ສ້າງນັ້ນ ເຈົ້າຂອງໂຄງການມີສິດທວງໃຫ້ຜູ້ຮັບເຫມົາທຳການສ້ອມແປງຄືນໂດຍບໍ່ເສັຽຄ່າສ້ອມແປງແຕ່ ຢ່າງໃດ ຖ້າວ່າກຳນົດເວລາຮັບປະກັນນັ້ນ ຫາກຍັງບໍ່ທັນໄດ້ສິ້ນສຸດ.

## ຫມວດທີ IX
## ສັນຍາຂົນສົ່ງ

**ມາດຕາ 62** : ສັນຍາຂົນສົ່ງ.

ສັນຍາຂົນສົ່ງ ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍຫນຶ່ງແມ່ນຜູ້ຂົນສົ່ງເປັນຜູ້ຮັບຜິດຊອບ ນຳສົ່ງຜູ້ໂດຍສານ, ເຄື່ອງບັນທຸກ ຫລື ສິນຄ້າໄປຮອດຈຸດຫມາຍຫລື ຕາມຈຸດປະສົງຂອງອີກຝ່າຍຫນຶ່ງ.

ການຂົນສົ່ງອາດຈະເຮັດຂຶ້ນໂດຍ ທາງບົກ, ທາງນ້ຳ ຫລືທາງອາກາດ ແລະໃຫ້ປະຕິບັດຕາມລະບຽບການສະເພາະ.

ຜູ້ຂົນສົ່ງມີພັນທະສົ່ງຜູ້ໂດຍສານໄປຮອດຈຸດຫມາຍຢ່າງປອດໄພ, ນຳສົ່ງເຄື່ອງບັນທຸກ ຫລື ສິນຄ້າທີ່ມອບຫມາຍໃຫ້ນັ້ນໄປຮອດຈຸດຫມາຍ ແລະມອບໃຫ້ຜູ້ທີ່ມີສິດຮັບເອົາເຄື່ອງບັນທຸກ ຫລື ສິນຄ້ານັ້ນ. ການຈ່າຍຄ່າໂດຍສານ ຫລື ຄ່າຂົນສົ່ງອາດຈະຈ່າຍກ່ອນ ຫລື ນຳຫລັງກໍໄດ້ຕາມການຕົກລົງກັນ.

ໃນກໍລະນີ ທີ່ເກີດອຸປະຕິເຫດ ຜູ້ຂົນສົ່ງຕ້ອງຮັບຜິດຊອບຕໍ່ຜູ້ໂດຍສານທີ່ໄດ້ເສັຽຊີວິດ ຫລື ໄດ້ຮັບບາດເຈັບ, ຮັບຜິດຊອບຕໍ່ເຄື່ອງບັນທຸກ ຫລື ສິນຄ້າທີ່ໄດ້ເສັຽຫາຍຈາກການຂົນສົ່ງ ເວັ້ນເສັຽແຕ່ກໍລະນີທີ່ມີເຫດຜົນບັງເອີນ ຫລື ເຫດສຸດວິໄສ.

## ຫມວດທີ X
## ສັນຍາຫຸ້ນສ່ວນ

**ມາດຕາ 63** : ສັນຍາຫຸ້ນສ່ວນ.

ສັນຍາຫຸ້ນສ່ວນແມ່ນການຕົກລົງລະຫວ່າງສອງຄົນ ຫລືຫລາຍຄົນ ເພື່ອເອົາເງິນ ຫລື ຊັບສິ່ງ ຂອງ ມາຮ່ວມກັນລົງທຶນດຳເນີນທຸລະກິດ ແລະແບ່ງປັນຜົນກຳໄລ.

ຂາຫຸ້ນຈະຕົກລົງກັນຢ່າງໃດກໍໄດ້ ໂດຍສອດຄ່ອງກັບລະບຽບຂອງວິສາຫະກິດຫຸ້ນສ່ວນ.

**ມາດຕາ 64** : ອາຍຸຂອງວິສາຫະກິດຫຸ້ນສ່ວນ.

ວິສາຫະກິດຫຸ້ນສ່ວນຈະສິ້ນສຸດລົງດັ່ງນີ້ :

1. ເມື່ອຫມົດກຳນົດຂອງສັນຍາຫຸ້ນສ່ວນແລ້ວ;
2. ໃນກໍລະນີທີ່ສັນຍາຫຸ້ນສ່ວນຫາກບໍ່ໄດ້ວາງກຳນົດໄວ້ວິສາຫະກິດຈະສິ້ນສຸດລົງຄື :

ເມື່ອທຶນຂອງວິສາຫະກິດຫຸ້ນສ່ວນ ຫາກຫລຸດຈຳນວນທີ່ກົດຫມາຍກຳນົດໄວ້.

ເມື່ອວິສາຫະກິດຫຸ້ນສ່ວນຫາກດຳເນີນກິດຈະການຕໍ່ໄປບໍ່ໄດ້.

ເມື່ອຂາຫຸ້ນຫາກເສັຽຊີວິດ ແລະບໍ່ມີຜູ້ສືບທອດມູນມໍຣະດົກ ເພື່ອດຳເນີນກິດຈະການຕໍ່ໄປ.

**ມາດຕາ 65** : ການສຳລະສະສາງ.

ເມື່ອວິສາຫະກິດຫຸ້ນສ່ວນຫາກໄດ້ສິ້ນສຸດລົງ ຖ້າບໍ່ມີການຕົກລົງຕ່າງຫາກຢູ່ໃນສັນຍາແລ້ວ ການປັນຜົນກຳໄລ ຫລື ຫລຸບທຶນແມ່ນອີງຕາມຫຸ້ນຂອງແຕ່ລະຄົນ.